# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

01-08 ເມສາ 2024
ປີທີ 13
ສະບັບທີ 964
ລາຍສັບປະດາ


## ຄະນະຜູ້ແທນສະພາແຫ່ງຊາດລາວ ສຳເລັດ ການເຂົ້າຮ່ວມກອງປະຊຸມໃຫຍ່ IPU ຄັ້ງທີ 148



(ສພຊ) - ໃນລະຫວ່າງວັນທີ 23-27 ມີນາ 2024 ຄະນະຜູ້ແທນສະພາແຫ່ງຊາດ ນຳໂດຍທ່ານ ປອ. ນາງ ສູນທອນ ໄຊຍະຈັກ, ຮອງປະທານສະພາແຫ່ງຊາດ ແຫ່ງ ສປປລາວ ໄດ້ເຂົ້າຮ່ວມກອງປະຊຸມໃຫຍ່ສະຫະພັນລັດຖະສະພາສາກົນ (IPU) ຄັ້ງທີ 148 ທີ່ເຈນີວາ, ປະເທດສະວິດເຊີແລນ ເຊິ່ງມີຄະນະຜູ້ແທນຫຼາຍກວ່າ 1.600 ຄົນ ຈາກ 146 ປະ ເທດ ທີ່ເປັນສະມາຊິກ IPU, ອົງການສະຫະປະ

ອ່ານຕໍ່ໜ້າ 8

## ທາບທາມຄຳຄິດເຫັນໃສ່ຮ່າງປັບປຸງ ກົດໝາຍ 3 ສະບັບ ຢູ່ນະຄອນຫຼວງວຽງຈັນ



(ສພຊ) - ກອງປະຊຸມທາບທາມຄຳຄິດເຫັນໃສ່ຮ່າງປັບປຸງກົດໝາຍ 3 ສະບັບ ໃນຂົງເຂດສະພາແຫ່ງຊາດ ປະກອບມີ: ກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໄດ້ຈັດຂຶ້ນໃນລະຫວ່າງວັນທີ 25-26 ມີນາ 2024ທີ່ຫ້ອງປະຊຸມໃຫຍ່ຂອງ

ອ່ານຕໍ່ໜ້າ 3

## ສຳເລັດກອງປະຊຸມກວດກາເນື້ອໃນ ຮ່າງກົດໝາຍປົກປັກຮັກສາສິ່ງແວດລ້ອມ



(ສພຊ)-ກອງປະຊຸມກວດກາເນື້ອໃນຮອບດ້ານຂອງຮ່າງກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ (ສະບັບປັບປຸງ) ໄດ້ຈັດຂຶ້ນໃນລະຫວ່າງວັນທີ 22-23 ມີນາ 2024 ທີ່ຫ້ອງປະຊຸມຣີສອດນາປ່າກວາງ, ທ່າລາດ, ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະ

ອ່ານຕໍ່ໜ້າ 4

## 3 ກົດໝາຍ ຂົງເຂດ ສພຊ ໄດ້ຮັບການທາບທາມ




(ສພຊ) - ລະຫວ່າງວັນທີ 28-29 ມີນາ 2024 ທີ່ສະພາປະຊາຊົນແຂວງເຊກອງ ໄດ້ຈັດກອງປະຊຸມທາບທາມຮ່າງກົດໝາຍ 3 ສະບັບ ໃນຂົງເຂດສະພາແຫ່ງຊາດ ໂດຍການເປັນປະທານຮ່ວມຂອງທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ ແລະ ທ່ານ ປອ. ແພງສີ ສີລາວົ ຮອງປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 16; ເຂົ້າຮ່ວມມີບັນດາທ່ານສສຊປະຈຳເຂດເລືອກຕັ້ງທີ 16, ສະມາຊິກສະພາປະຊາຊົນແຂວງ (ສສຂ) ແລະ ຫົວໜ້າ-ຮອງຫົວໜ້າພະ

ອ່ານຕໍ່ໜ້າ 4

## ກວດກາເນື້ອໃນຮອບດ້ານຮ່າງກົດໝາຍສະຫະກອນ



(ສພຊ)-ກອງປະຊຸມກວດກາເນື້ອໃນຮອບດ້ານຂອງຮ່າງກົດໝາຍວ່າດ້ວຍສະຫະກອນ (ສະບັບສ້າງໃໝ່) ໄດ້ຈັດຂຶ້ນໃນລະຫວ່າງວັນທີ 25-26 ມີນາ 2024 ທີ່ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ແລະພັດທະນາຊົນນະບົດ ໂດຍການເປັນປະທານຂອງທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ; ເຂົ້າຮ່ວມມີບັນດາທ່ານຮອງປະທານກຳມາທິການພາຍໃນສະພາແຫ່ງຊາດ, ທ່ານຮອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້, ທ່ານຮອງຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ, ບັນດາທ່ານຄະນະທີ່ປຶກສາທາງດ້ານກົດໝາຍຂອງຄະນະປະຈຳສະພາແຫ່ງຊາດ, ບັນດາທ່ານຫົວໜ້າ-ຮອງຫົວໜ້າກົມ ແລະ ພະນັກງານ-ລັດຖະກອນ ຂອງສະພາແຫ່ງຊາດ ແລະ ບັນດາກະຊວງທີ່ກ່ຽວຂ້ອງ.

ທັງນີ້ ເພື່ອເຮັດໃຫ້ຮ່າງກົດໝາຍວ່າດ້ວຍສະຫະກອນ (ສະບັບສ້າງໃໝ່) ມີເນື້ອໃນຮັດກຸມ, ຈະແຈ້ງສອດຄ່ອງກັບແນວທາງນະໂຍບາຍຂອງລັດ, ລັດຖະທຳມະນູນ ແລະ ເພື່ອເປັນການກວດກາຄືນເນື້ອໃນຮອບດ້ານຂອງຮ່າງກົດໝາຍດັ່ງກ່າວໃຫ້ແທດເໝາະກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ, ສະພາບການແຂ່ງຂັນການຜະລິດສິນຄ້າ ແລະ ການບໍລິການທີ່ມີການແກ່ງແຍ້ງແຂ່ງ

ອ່ານຕໍ່ໜ້າ 8

## ທາບທາມກົດໝາຍ 3 ສະບັບ ຂົງເຂດ ສພຊ




(ສພຊ)-ເພື່ອເປັນການລະດົມສະຕິປັນຍາ, ຄຳຄິດເຫັນທີ່ເປັນປະໂຫຍດຂອງສະມາຊິກສະພາແຫ່ງຊາດ (ສສຊ) ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ໃນຖານະເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ ກໍຄືເປົ້າໝາຍທີ່ກ່ຽວຂ້ອງຕ່າງໆ ເພື່ອປັບປຸງກົດໝາຍ 3 ສະບັບ

ອ່ານຕໍ່ໜ້າ 4



ຄວາມສຳເລັດ... (ໜ້າ 9)




ລັດຖະບານ... (ໜ້າ 11)




ບົດຮຽນກ່ຽວກັບ... (ໜ້າ 12)

# ອົບຮົມການຮັບຕ້ອນ ແລະ ໃຫ້ຄຳປຶກສາ ກ່ຽວກັບຄຳຮ້ອງຂໍຄວາມເປັນທຳ



(ສພຊ) - ກອງປະຊຸມເຝິກອົບຮົມການຮັບຕ້ອນ ແລະ ໃຫ້ຄຳປຶກສາກ່ຽວກັບຄຳຮ້ອງຂໍຄວາມເປັນທຳໃຫ້ແກ່ພະນັກງານຂອງກຳມາທິການສະພາແຫ່ງຊາດ (ສພຊ) ແລະ ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາປະຊາຊົນຂັ້ນແຂວງ (ສພຂ) ໄດ້ຈັດຂຶ້ນໃນລະຫວ່າງວັນທີ 27-28 ມີນາ 2024 ພາຍໃຕ້ການເປັນປະທານຂອງທ່ານ ຄຳແພງ ວິລະພັນ ປະທານກຳມາທິການຍຸຕິທຳ; ເຂົ້າຮ່ວມມີຮອງປະທານກຳມາທິການ, ຄະນະກົມ, ຄະນະພະແນກ ແລະ ລັດຖະກອນວິຊາການຂອງກຳມາທິການຍຸຕິທຳ, ພະນັກງານຂອງບັນດາກຳມາທິການ ແລະ ຄະນະເລ ຂາທິການ ສພຊ ພ້ອມດ້ວຍບັນດາທ່ານປະທານ-ຮອງປະທານ, ພະນັກງານຂອງຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສພຂ 18 ແຂວງທົ່ວປະເທດ ແລະ ພາກສ່ວນກ່ຽວຂ້ອງ.

ທັງນີ້, ກໍເພື່ອໃຫ້ຜູ້ເຂົ້າຮ່ວມ ຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບການຮັບຄຳຮ້ອງຂໍຄວາມເປັນທຳ, ຮັບຕ້ອນ ແລະ ໃຫ້ຄຳປຶກສາ, ກົນໄກການຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ທັງເປັນການແລກປ່ຽນບົດຮຽນລະຫວ່າງສູນກາງ ກັບ ທ້ອງຖິ່ນ ເຮັດໃຫ້ພະນັກງານ-ລັດຖະກອນສາມາດກຳໄດ້ກ່ຽວກັບກົນໄກການຮັບຕ້ອນ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳ ທີ່ຕິດພັນກັບວຽກງານຕົວຈິງໃນການຮັບຕ້ອນແລະໃຫ້ຄຳປຶກສາແກ່ຜູ້ມາຍື່ນຄຳຮ້ອງຂໍຄວາມເປັນທຳ ແນໃສ່ເຮັດໃຫ້ການປະຕິບັດພາລະບົດບາດຕົວ ຕາມກອດກາຂອງ ສພຊ ແລະ ສພຂ ໃນຖານະເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນ ມີຜົນສັກສິດຢ່າງເຕັມສ່ວນ.

ໃນກອງປະຊຸມ, ທ່ານ ນາງ ກັນທິນາ ປ້ານອິນຫອນ ຫົວໜ້າກົມຕິດຕາມກວດກາວຽກງານຍຸຕິທຳ, ກຳມາທິການຍຸຕິທຳ ໄດ້ສະເໜີບົດຮຽນກ່ຽວກັບການຮັບຄຳຮ້ອງຂໍຄວາມເປັນທຳ, ການຮັບຕ້ອນ ແລະ ໃຫ້ຄຳປຶກສາປະຊາຊົນຂອງສະພາແຫ່ງຊາດ; ພ້ອມນັ້ນ, ບັນດາທ່ານທີ່ເຂົ້າຮ່ວມຍັງໄດ້ແລກປ່ຽນຄຳຄິດຄຳເຫັນຢ່າງກົງໄປກົງມາ ທັງໄດ້ຈັດຕັ້ງກຸ່ມເຮັດບົດເຝິກຫັດໃນການຄົ້ນຄວ້າ, ການຮັບ, ການຕ້ອນຮັບ ແລະ ໃຫ້ຄຳປຶກສາປະຊາຊົນ ທັງລາຍງານຜົນການຄົ້ນຄວ້າຂອງກຸ່ມ ແລະ ຖອດຖອນບົດຮຽນການປະຕິບັດວຽກງານຕົວຈິງໃນໄລຍະຜ່ານມາ ເຊິ່ງໄດ້ຍົກໃຫ້ເຫັນຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກຂອງແຕ່ລະເຂດເລືອກຕັ້ງເພື່ອນຳເອົາບົດຮຽນດັ່ງກ່າວນຳໄປປັບໃຊ້ເຂົ້າໃນເຂດເລືອກຕັ້ງຂອງຕົນ.

**(ນາງ ປາກາລັກ ພົມມີໄຊ)**

# ອັດຕະປື ທາບທາມກົດໝາຍ 3 ສະບັບ ຂົງເຂດສະພາແຫ່ງຊາດ




(ສພຊ) - ລະຫວ່າງວັນທີ 25-26 ມີນາ 2024 ທີ່ສະພາປະຊາຊົນແຂວງອັດຕະປື ໄດ້ຈັດກອງປະຊຸມທາບທາມຮ່າງກົດໝາຍ 3 ສະບັບ ໃນຂົງເຂດສະພາແຫ່ງຊາດ ໂດຍການເປັນປະທານຮ່ວມຂອງທ່ານ ນາງ ທັດສະດາພອນ ຈັນທະມາດ ຮອງປະທານກຳມາທິການບັນດາເຜົ່າ ແລະ ທ່ານ ນາງ ມີນາພອນ ໄຊສົມພູ ປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 17; ເຂົ້າຮ່ວມມີບັນດາທ່ານ ສສຊ ປະຈຳເຂດເລືອກຕັ້ງທີ 17, ສະມາຊິກສະພາປະຊາຊົນແຂວງ (ສສຂ) ແລະ ຫົວໜ້າ-ຮອງຫົວໜ້າພະແນກການ, ອົງການອ້ອມຂ້າງແຂວງອັດຕະປື.

ທັງນີ້ ກໍເພື່ອເປັນການປະຕິບັດຕາມກົດໝາຍວ່າດ້ວຍການສ້າງນິຕິກຳສະບັບປັບປຸງປີ 2021, ມາດຕາ 17 ກຳ ນົດກ່ຽວກັບການຈັດຕັ້ງທີ່ມີສິດສະເໜີສ້າງກົດໝາຍ ແລະ ມາດຕາ 39 ການທາບທາມຄຳເຫັນ, ໃນນີ້ ຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ) ແມ່ນໜຶ່ງໃນຈຳນວນອົງການທີ່ມີສິດສະເໜີສ້າງກົດໝາຍ ແລະ ການທາບທາມຄຳເຫັນ ເຊິ່ງກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ແມ່ນນອນຢູ່ໃນສິດ ແລະ ໜ້າທີ່ຂອງ ຄປຈສພຊ ເປັນຜູ້ສະເໜີສ້າງ ແລະປັບປຸງທັງເປັນການລະດົມສະຕິປັນຍາ, ຄຳຄິດເຫັນທີ່ເປັນປະໂຫຍດຂອງສສຊແລະສສຂ ໃນຖານະເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ ກໍຄືເປົ້າໝາຍທີ່ກ່ຽວຂ້ອງຕ່າງໆເພື່ອປັບປຸງກົດໝາຍ 3 ສະບັບ ໃຫ້ຄົບຖ້ວນ, ຮັດກຸມແລະແທດເໝາະກັບສະພາບຕົວຈິງ ກ່ອນທີ່ຈະນຳໄປພິຈາລະນາ, ຮັບຮອງເອົາຢູ່ກອງປະຊຸມສະໄໝສາມັນເທື່ອທີ 7 ຂອງ ສພຊ ຊຸດທີ IX.

ໃນກອງປະຊຸມໄດ້ຮັບຟັງບົດລາຍງານກ່ຽວກັບການປັບປຸງກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມໄດ້ສຸມສະຕິປັນຍາເພື່ອຄົ້ນຄວ້າປະກອບຄຳເຫັນຕໍ່ແຕ່ລະເນື້ອໃນຂອງ 3 ກົດໝາຍຢ່າງມີຈຸດສຸມ ເຊິ່ງຈະເປັນຂໍ້ມູນສຳຄັນໃຫ້ແກ່ຄະນະຮັບຜິດຊອບນຳໄປຄົ້ນຄວ້າ, ວິເຄາະວິໄຈປັບປຸງກົດໝາຍແຕ່ລະສະບັບ ເພື່ອເຮັດໃຫ້ກົດໝາຍມີເນື້ອໃນຄົບຖ້ວນ, ຮັດກຸມແລະສາມາດຈັດຕັ້ງປະຕິບັດໄດ້ດ້ວຍຄຸນນະພາບສູງ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌ (STEPs) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ.

**(ນາງ ກຸກກິກ ບຸດດາໄຊ)**




## ເລື່ອງເດັ່ນ ຂ່າວເດັດ

***# ຄັດໂດຍ: ທອມສະນິດ***

*❐ ມົນລະພິດທາງອາກາດ ແມ່ນໜຶ່ງໃນຄວາມສ່ຽງດ້ານສິ່ງແວດລ້ອມທີ່ໃຫຍ່ທີ່ສຸດຕໍ່ສຸຂະພາບ ປັດຈຸບັນ, ສະພາບອາກາດແມ່ນເລີ່ມຮ້າຍແຮງຂຶ້ນ ເຊິ່ງຄາດວ່າຈະສົ່ງຜົນກະທົບຕໍ່ສຸຂະພາບຂອງຄົນເຮົາຫຼາຍສົມຄວນ ສະນັ້ນ, ຈຶ່ງມີຄວາມຈຳເປັນທີ່ທຸກຄົນ ໂດຍສະເພາະກຸ່ມທີ່ມີຄວາມສ່ຽງສູງຕ້ອງເຂົ້າໃຈເຖິງອັນຕະລາຍຈາກມົນລະພິດທາງອາກາດແລະປະຕິບັດມາດຕະການຕ່າງໆເພື່ອປ້ອງກັນຕົນເອງ ສຳລັບຜູ້ທີ່ມີຄວາມສ່ຽງສູງ ໂດຍສະເພາະເດັກນ້ອຍ, ຜູ້ສູງອາຍຸ, ແມ່ຍິງຖືພາ ແລະ ຜູ້ທີ່ມີພະຍາດທາງລະບົບຫາຍໃຈ ເຊັ່ນ: ພະຍາດຫືດ ຫຼື ຄົນທີ່ມີພະຍາດປະຈຳຕົວ ຈຳເປັນຕ້ອງໄດ້ລະມັດລະວັງເປັນພິເສດ ມົນລະພິດທາງອາກາດ ແມ່ນປະກອບມີຝຸ່ນລະອອງ ແລະ ສານເຄມີ ລະດັບຄວາມຮຸນແຮງຂອງມົນລະພິດທາງອາກາດ ແມ່ນຈະມີການລາຍງານຕາມດັດຊະນີຄຸນນະພາບອາກາດ ຫຼື AQI ເຊິ່ງເປັນລະບົບການຈັດລະດັບ ເພື່ອຊີ້ລະດັບມົນລະພິດທາງອາກາດລວມທັງ PM2,5 ທີ່ເປັນມົນລະພິດທາງອາກາດທີ່ເປັນອັນຕະລາຍທີ່ສຸດປະເພດໜຶ່ງ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໄດ້ນຳໃຊ້ AQI ແລະ ຈະມີການລາຍງານສະຖານະການເປັນປະຈຳ ໃນໄລຍະທີ່ມີມົນລະພິດທາງອາກາດສູງສຸດ; ນອກນີ້, ກະຊວງສາທາລະນະສຸກກໍຈະມີການອອກຄຳແນະນຳ ແລະ ແຈ້ງເຕືອນ ກ່ຽວກັບສຸຂະພາບເປັນປະຈຳໃນ ສປປ ລາວ ແຫຼ່ງມົນລະພິດທາງອາກາດ ຕົ້ນຕໍແມ່ນປະກອບມີການເຜົາໄໝ້ຈາກການເຮັດກະສິກຳ ການຈູດຂີ້ເຫຍື້ອໃນຄົວເຮືອນ ແລະ ທົ່ວໜ່ວຍທຸລະກິດ ໄຟໄໝ້ປ່າ ແລະ ການປ່ອຍມົນລະພິດຈາກພາຫະນະຕ່າງໆ ມີການຄາດຄະເນວ່າມົນລະພິດທາງອາກາດຢູ່ພື້ນທີ່ນອກອາຄານໄດ້ສົ່ງຜົນໃຫ້ປະມານ 4,2 ລ້ານຄົນ ເສຍຊີວິດກ່ອນໄວອັນຄວນໃນທົ່ວໂລກ.*

***ໜສພ. ວຽງຈັນໃໝ່ 27/03/2024***

*❐ ປີ 2023 ລັດວິສາຫະກິດຖືຮຸ້ນລາວ (ລຮລ) ສາມາດສ້າງລາຍຮັບໄດ້ 50,51 ລ້ານໂດລາ, ມີຜົນກຳໄລທາງການບັນຊີ 21,86 ລ້ານໂດລາ, ໄດ້ຊຳລະຕົ້ນທຶນ-ດອກເບ້ຍໃຫ້ກະຊວງການເງິນ ແລະ ທະນາຄານທຸລະກິດພາຍໃນ ປະເທດ ຕາມສັນຍາ ແລະ ປະຕິບັດພັນທະອາກອນ 5,51 ລ້ານໂດລາ; 4 ໂຄງການທີ່ ລຮລ ຮ່ວມຖືຮຸ້ນໃນປັດຈຸບັນ ສາມາດຜະລິດພະລັງງານໄຟຟ້າໄດ້ທັງໝົດ 19.688 ລ້ານ kWh ປະກອບມີ: ໂຄງການໄຟຟ້ານ້ຳເທີນ 2 ຜະລິດໄດ້ 4.432 ລ້ານ kWh, ໂຄງການໄຟຟ້າຄວາມຮ້ອນຫົງສາ 12.077 ລ້ານ kWh, ໂຄງການໄຟຟ້າເຊປຽນ-ເຊນ້ຳນ້ອຍ 1.856 ລ້ານ kWh ແລະ ໂຄງການໄຟຟ້ານ້ຳງຽບ 1 ຜະລິດໄດ້ 1.323 ລ້ານ kWh, ລວມລາຍຮັບຈາກການຂາຍໄຟຟ້າທັງໝົດ 1.206 ລ້ານໂດລາ, ລວມພັນທະທີ່ໄດ້ມອບໃຫ້ລັດຖະບານ 85,70 ລ້ານ ໂດລາ (ຄ່າພາກຫຼວງ 32,02 ລ້ານໂດລາ, ອາກອນກຳໄລ 37,20 ລ້ານໂດລາ ແລະ ຄ່າທຳນຽມແຮ່ທາດ 16,48 ລ້ານໂດລາ).*

***ໜສພ. ປະຊາຊົນ 27/03/2024***

# ອົບຮົມການນຳໃຊ້ຖານຂໍ້ມູນຄຸ້ມຄອງ ວຽກງານຄຳຮ້ອງຂໍຄວາມເປັນທຳ



(ສພຊ)-ກອງປະຊຸມເຝິກອົບຮົມການນຳໃຊ້ຖານຂໍ້ມູນຄຸ້ມຄອງວຽກງານຄຳຮ້ອງຂໍຄວາມເປັນທຳຂອງຄະນະປະຈຳສະພາແຫ່ງຊາດ ໄດ້ຈັດຂຶ້ນໃນວັນທີ 25 ມີນາ 2024 ຢູ່ໂຮງແຮມແລນມາກ, ນະຄອນຫຼວງວຽງຈັນ ໂດຍການເປັນປະທານຂອງທ່ານສີສູນທອນສ.ຜາບມີໄຊຍ໌ ຮອງປະທານກຳມາທິການຍຸຕິທຳ; ເຂົ້າຮ່ວມມີບັນດາທ່ານຄະນະກົມ, ຄະນະພະແນກ, ວິຊາການຂອງກຳມາທິການຍຸຕິທຳ ແລະພະນັກງານຂາເຂົ້າ-ຂາອອກຂອງບັນດາກຳມາທິການ ແລະ ຄະນະເລຂາທິການພາຍໃນສະພາແຫ່ງຊາດ ພ້ອມດ້ວຍພາກສ່ວນກ່ຽວຂ້ອງ. ທັງນີ້, ກໍເພື່ອຮັບປະກັນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນ ທີ່ເຮັດໜ້າທີ່ວຽກງານຄຸ້ມຄອງຂໍ້ມູນກ່ຽວກັບຄຳຮ້ອງຂໍຄວາມເປັນທຳໃຫ້ມີຄວາມຮັບຮູ້, ເຂົ້າໃຈ ແລະ ເປັນເອກະພາບ ໃນການນຳໃຊ້ລະບົບການຄຸ້ມຄອງສະຖິຕິຄຳຮ້ອງຂໍຄວາມເປັນທຳ.

ທ່ານສີສູນທອນສ.ຜາບມີໄຊຍ໌ ໄດ້ກ່າວເປີດກອງປະຊຸມ ເຊິ່ງທ່ານໃຫ້ຮູ້ວ່າ: ການສ້າງຖານຂໍ້ມູນ ແມ່ນເພື່ອຄຸ້ມຄອງຂໍ້ມູນກ່ຽວກັບຄຳຮ້ອງຂໍຄວາມເປັນທຳຂອງຄະນະປະຈຳສະພາແຫ່ງຊາດທີ່ເຂົ້າມາໃນສະພາແຫ່ງຊາດໂດຍສະເພາະການຄຸ້ມຄອງວຽກງານສະຖິຕິຄຳຮ້ອງຂໍຄວາມເປັນທຳດ້ວຍຮູບແບບເອເລັກໂຕຣນິກທີ່ເປັນລະບົບທັນສະໄໝ, ສາມາດຕິດຕາມກວດກາການຈໍລະຈອນເອກະສານ, ກຳນົດເວລາໃນການພິຈາລະນາ, ການລາຍງານການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ແລະ ການລາຍງານຄືນຜົນການແກ້ໄຂຂອງອົງການທີ່ກ່ຽວຂ້ອງ ກ່ຽວກັບຄຳຮ້ອງຂໍຄວາມເປັນທຳ ໃຫ້ມີຄວາມສະດວກ, ວ່ອງໄວ ແລະ ຮັບປະກັນຄວາມຖືກຕ້ອງ.

ໃນວາລະກອງປະຊຸມ, ໄດ້ຮັບຟັງການນຳສະເໜີກ່ຽວກັບຖານຂໍ້ມູນຄຸ້ມຄອງວຽກງານຄຳຮ້ອງຂໍຄວາມເປັນທຳຂອງຄະນະປະຈຳສະພາແຫ່ງຊາດ ໂດຍທ່ານ ທົນນະກອນ ບົວສະຫວັນ ວິທະຍາກອນຈາກບໍລິສັດ MTS; ພ້ອມນັ້ນ, ສຳມະນາກອນທັງໝົດໄດ້ທົດລອງນຳໃຊ້ການປ້ອນຂໍ້ມູນຄຳຮ້ອງເຂົ້າລະບົບດັ່ງກ່າວ ທັງໄດ້ແລກປ່ຽນຄຳຄິດຄຳເຫັນ, ຖອດຖອນບົດຮຽນຮ່ວມກັນຢ່າງກົງໄປກົງມາ ລະຫວ່າງວິທະຍາກອນກັບສຳມະນາກອນເພື່ອໃຫ້ຜູ້ທີ່ຈະນຳໃຊ້ຕົວຈິງມີຄວາມເຂົ້າໃຈໃນການນຳໃຊ້ ແລະເພື່ອເຮັດໃຫ້ຖານຂໍ້ມູນມີຄວາມສົມບູນ, ສາມາດນຳໃຊ້ເຂົ້າໃນການປະຕິບັດວຽກງານຕົວຈິງໃນຕໍ່ໜ້າຢ່າງມີປະສິດທິພາບແລະປະສິດທິຜົນ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນທາງດ້ານງົບປະມານຈາກມູນນິທິ ເວສທ໌ມິນສ໌ເທີ ເພື່ອປະຊາທິປະໄຕ (Westminster Foundation for Democracy-WFD).

**(ນາງ ປາກາລັກ ພົມມີໄຊ)**

# ສຳເລັດກອງປະຊຸມໃຫຍ່ຄັ້ງທີ II ຂອງໜ່ວຍ ຊາວໜຸ່ມຮາກຖານກົມບໍລິຫານ-ພິທີການ




(ສພຊ) - ກອງປະຊຸມໃຫຍ່ຄັ້ງທີ II ຂອງໜ່ວຍຊາວໜຸ່ມຮາກຖານກົມບໍລິຫານ-ພິທີການ ໄດ້ເປີດຂຶ້ນ ແລະປິດລົງດ້ວຍຜົນສຳເລັດອັນຈົບງາມໃນຕອນເຊົ້າຂອງວັນທີ 26 ມີນາ 2024 ໂດຍການເປັນປະທານຮ່ວມຂອງສະຫາຍ ປອ. ອາລຸນຍາເດດ ຣາຊະພົນ ເລຂາໜ່ວຍພັກກົມບໍລິຫານ-ພິທີການ, ສະຫາຍ ພອນແກ້ວ ຕົ້ນວໍລະຈິດ ກຳມະການຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ເລຂາຄະນະບໍລິຫານງານຊາວໜຸ່ມສະພາແຫ່ງຊາດ ແລະ ສະຫາຍ ນາງ ເຄືອວັນ ສຸດທະຈັນ ເລຂາໜ່ວຍຊາວໜຸ່ມຮາກຖານກົມບໍລິຫານ-ພິທີການ; ມີບັນດາສະຫາຍຕາງໜ້າໜ່ວຍຊາວໜຸ່ມຮາກຖານພາຍໃນສະພາແຫ່ງຊາດ ພ້ອມດ້ວຍສະມາຊິກຊາວໜຸ່ມພາຍໃນໜ່ວຍຮາກຖານດັ່ງກ່າວ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຮັບຟັງການລາຍງານບົດສຳຫຼວດການນຳພາ ແລະ ພ້ອມກັນສະຫຼຸບຕີລາຄາ, ພິຈາລະນາແລະຮັບຮອງເອົາບົດລາຍງານການເມືອງຂອງໜ່ວຍຊາວໜຸ່ມຮາກຖານກົມບໍລິຫານ-ພິທີການ ເຊິ່ງກອງປະຊຸມເຫັນດີເປັນເອກະພາບຕໍ່ການຕີລາຄາການເຄື່ອນໄຫວວຽກງານຕົວຈິງໃນໄລຍະຜ່ານມາສະແດງໃຫ້ເຫັນເຖິງຜົນງານຫຼາຍດ້ານທີ່ພົ້ນເດັ່ນເຊັ່ນ: ດ້ານດີ, ດ້ານຕັ້ງໜ້າ ທີ່ຄວນສືບຕໍ່ຜັນຂະຫຍາຍ ແລະ ບາງບັນຫາຄົງຄ້າງທີ່ຕ້ອງປັບປຸງແກ້ໄຂ ເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວວຽກງານຂອງໜ່ວຍຊາວໜຸ່ມຮາກຖານກົມບໍລິຫານ-ພິທີການໃນຕໍ່ໜ້າ ມີປະສິດທິຜົນສູງຂຶ້ນ ແລະ ຍັງຖອດຖອນບົດຮຽນຈຳນວນໜຶ່ງ ເພື່ອເປັນເຂັ້ມທິດເຍືອງທາງໃນການສືບຕໍ່ສູ້ຊົນນຳພາໜ່ວຍຊາວໜຸ່ມຮາກຖານຊຸດໃໝ່ໃນຕໍ່ໜ້າ.

ພ້ອມນັ້ນ, ກອງປະຊຸມໄດ້ເສີມຂະຫຍາຍປະຊາທິປະໄຕເລືອກຕັ້ງເອົາຄະນະໜ່ວຍຊາວໜຸ່ມຮາກຖານກົມບໍລິຫານ-ພິທີການຊຸດໃໝ່ເຊິ່ງມີຜູ້ສະໝັກ 5 ສະຫາຍ ຍິງ 1 ສະຫາຍ ເລືອກໄດ້ 3 ສະຫາຍ ຍິງ 1 ສະຫາຍ; ກອງປະ ຊຸມຄັ້ງປະຖົມມະລຶກໄດ້ເຫັນດີເລືອກເອົາສະຫາຍຈັນໄລວັນ ພົມມາໄຊ ເປັນເລຂາ, ສະຫາຍ ນາງ ອານິງ ກອງເງິນ ເປັນຮອງເລຂາທັງເປັນປະທານກວດກາ ແລະ ສະຫາຍ ເພັດວັນນະເລີດ ເປັນກຳມະການ.

ໂອກາດດຽວກັນນີ້, ສະຫາຍ ປອ. ອາລຸນຍາເດດ ຣາຊະພົນ ໄດ້ມີຄຳເຫັນໂອ້ລົມເຊິ່ງສະຫາຍໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານຂອງຄະນະໜ່ວຍຊາວໜຸ່ມຊຸດຜ່ານມາ ແລະ ສະມາຊິກຊາວໜຸ່ມທັງໝົດ ທີ່ຍາດໄດ້ຜົນງານໃນຫຼາຍໆດ້ານ, ຄຽງຄູ່ກັນນີ້ ຍັງໄດ້ສະແດງຄວາມເປັນຫ່ວງເປັນໄຍຕໍ່ດ້ານອ່ອນ-ຂໍ້ຄົງຄ້າງ ເຊິ່ງຮຽກຮ້ອງໃຫ້ຄະນະໜ່ວຍຊາວໜຸ່ມຊຸດໃໝ່ ຕ້ອງສຸມໃສ່ປັບປຸງແກ້ໄຂໃຫ້ມີທິດທາງທີ່ຕັ້ງໜ້າກວ່າເກົ່າ; ພ້ອມກັນນັ້ນ, ສະຫາຍຍັງສະແດງຄວາມເຊື່ອໝັ້ນວ່າໃນຕໍ່ໜ້າຄະນະໜ່ວຍຊາວໜຸ່ມຊຸດໃໝ່ ຈະສືບຕໍ່ນຳພາ-ຊີ້ນຳສະມາຊິກພາຍໃນໜ່ວຍຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຕົນ ຕາມມະຕິກອງປະຊຸມໃນຄັ້ງນີ້ ໃຫ້ຍາດໄດ້ຜົນງານ ແລະ ຜົນສຳເລັດໃໝ່ທີ່ຍິ່ງໃຫຍ່ກວ່າເກົ່າ ທັງຮຽກຮ້ອງໃຫ້ສະມາຊິກຊາວໜຸ່ມພາຍໃນໜ່ວຍຈົ່ງເຊີດຊູສະຕິປັນຍາ ແລະ ຄວາມຮັບຜິດຊອບ ເພື່ອພ້ອມກັນກັບຄະນະໜ່ວຍຊາວໜຸ່ມຊຸດໃໝ່ເຮັດຫຼ້ອນໜ້າທີ່ການເມືອງຂອງຕົນໃຫ້ສູງຂຶ້ນຢ່າງບໍ່ຢຸດຢັ້ງ.

**(ນາງ ປາກາລັກ ພົມມີໄຊ)**




## ທາບທາມ...

(ຕໍ່ຈາກໜ້າ 1)

ຫ້ອງວ່າການນະຄອນຫຼວງວຽງຈັນ ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການກົດໝາຍ; ເຂົ້າຮ່ວມມີທ່ານ ປອ. ອານຸພາບ ຕຸນາລົມ ປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 1, ມີບັນດາທ່ານ ສສຊ ປະຈຳເຂດເລືອກຕັ້ງທີ 1, ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ, ຫົວໜ້າ-ຮອງຫົວໜ້າພະແນກການແລະອົງການທຽບເທົ່າ, ຄະນະນຳຈາກ 2 ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເຈົ້າເມືອງ, ສາມອົງການຈັດຕັ້ງມະຫາຊົນ, ສະຖາບັນການສຶກສາ ພ້ອມດ້ວຍພະນັກງານ-ລັດຖະກອນຈາກພາກສ່ວນທີ່ກ່ຽວຂ້ອງ.

ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ໄດ້ມີຄຳເຫັນຕໍ່ກອງປະຊຸມໃນຄັ້ງນີ້ວ່າ: ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ແມ່ນນິຕິກຳພື້ນຖານຮັບປະກັນແກ່ການປະຕິບັດສິດ ແລະ ປະຊາທິປະໄຕດ້ານການເມືອງຂອງປະຊາຊົນລາວບັນດາເຜົ່າ; ສ່ວນກົດໝາຍອີກ 2 ສະບັບ ແມ່ນຕິດພັນໂດຍກົງກັບການກຳນົດໂຄງປະກອບ, ກົງຈັກການຈັດຕັ້ງ, ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ກໍຄືກົນໄກການເຄື່ອນໄຫວຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃນຖານະທີ່ເປັນອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ.

ທ່ານປະທານກອງປະຊຸມໄດ້ເນັ້ນຕື່ມວ່າ: 3 ກົດໝາຍທີ່ນຳມາທາບທາມໃນຄັ້ງນີ້ ມີຄວາມສຳຄັນ ແລະ ມີຄວາມໝາຍຫຼາຍ ຕໍ່ການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຍ້ອນວ່າຕິດພັນເຊິ່ງກັນແລະກັນ ເປັນຕົ້ນ ກ່ອນສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ຈະເຄື່ອນໄຫວໄດ້ ກໍຕ້ອງມີການເລືອກຕັ້ງເອົາສະມາຊິກສະພາແຫ່ງຊາດ ແລະສະມາຊິກສະພາປະຊາຊົນຂັ້ນແຂວງ ເຊິ່ງແມ່ນປະຊາຊົນບັນດາເຜົ່າໄດ້ມອບສິດ ແລະ ອຳນາດໃຫ້ແກ່ຕົວແທນຂອງຕົນ ມາປະຕິບັດຢູ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງຕາມລັດຖະທຳມະນູນ ແລະ ກົດໝາຍກຳນົດ; ສະນັ້ນ, ຕ້ອງໄດ້ມີການເລືອກຕັ້ງຈາກພົນລະເມືອງລາວຜູ້ມີອາຍຸ 18 ປີຂຶ້ນໄປ ຫຼືເອີ້ນວ່າຜູ້ມີສິດເລືອກຕັ້ງ, ບຸກຄະລາກອນເຫຼົ່ານັ້ນ ຈະເຄື່ອນໄຫວປະຕິບັດພາລະບົດບາດຂອງຕົນມີປະສິດທິພາບ ແລະປະສິດທິຜົນ ຫຼື ບໍ່ ກໍຕ້ອງມີນິຕິກຳເປັນບ່ອນອີງໃນການຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ຢ່າງຈະແຈ້ງ, ສອດຄ່ອງກັບສະພາບຕົວຈິງຂອງປະເທດເຮົາ.

ໃນວາລະຂອງກອງປະຊຸມ ໄດ້ຮັບຟັງການຂຶ້ນຜ່ານຮ່າງກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນແຂວງ, ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ຈາກນັ້ນ ບັນດາຜູ້ເຂົ້າຮ່ວມໄດ້ສຸມໃສ່ປະກອບຄຳຄິດເຫັນຢ່າງຝົດຟື້ນຕໍ່ເນື້ອໃນມາດຕາຕ່າງໆຂອງກົດໝາຍ 3 ສະບັບ ໄປແຕ່ລະໝວດແຕ່ລະມາດຕາ ຕາມຄຳຖາມເຈາະຈີ້ມຂອງປະທານກອງປະຊຸມຢ່າງມີຈຸດສຸມ ແລະ ກົງໄປກົງມາ ເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະມາຊິກສະພາໃນໄລຍະໃໝ່ສາມາດຈັດຕັ້ງປະຕິບັດວຽກງານໃຫ້ມີປະສິດທິຜົນສູງກວ່າເກົ່າ ແນໃສ່ການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍໃຫ້ສູງຂຶ້ນ.

**(ອານຸສອນ ພູມມີທອນ)**



## ສຳເລັດ...

(ຕໍ່ຈາກໜ້າ 1)

ທານສະພາແຫ່ງຊາດ, ປະທານກຳມາທິການກົດໝາຍ;ເຂົ້າຮ່ວມມີທ່ານລັດຖະມົນຕີ-ຮອງລັດຖະມົນຕີກະຊວງຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມ,ບັນດາທ່ານຫົວໜ້າ-ຮອງຫົວໜ້າກົມ, ພະນັກງານຂອງສະພາແຫ່ງຊາດ ແລະກະຊວງ-ອົງການທີ່ກ່ຽວຂ້ອງ ພ້ອມດ້ວຍຄະນະຮັບຜິດຊອບປັບປຸງກົດໝາຍ.

ຈຸດປະສົງກໍເພື່ອຮັບປະກັນທາງດ້ານເນື້ອໃນຂອງຮ່າງກົດໝາຍສະບັບນີ້ ເຊິ່ງເປັນໜຶ່ງໃນກົດໝາຍຈຳນວນ 9 ສະບັບທີ່ລັດຖະບານສະເໜີຫາຄະນະປະຈຳສະພາແຫ່ງຊາດ(ຄປຈສພຊ) ມີການຄົ້ນຄວ້າເຮັດໃຫ້ຮ່າງກົດໝາຍມີຄວາມຮັດກຸມ, ຈະແຈ້ງ, ສອດຄ່ອງກັບແນວທາງນະໂຍບາຍຂອງລັດ, ລັດຖະທຳມະນູນ, ກົດໝາຍອື່ນ, ສົນທິສັນຍາສາກົນທີ່ສປປລາວເປັນພາຄີແລະແທດເໝາະກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ; ເພື່ອເປັນການລະດົມສະຕິປັນຍາຈາກພາກສ່ວນທີ່ກ່ຽວຂ້ອງກັບການສ້າງ ແລະ ປັບປຸງກົດໝາຍ ກ່ອນນຳສະເໜີກອງປະຊຸມ ຄປຈສພຊ ພິຈາລະນານຳເຂົ້າກອງປະຊຸມສະໄໝສາມັນເທື່ອທີ 7 ຂອງ ສພຊ ຊຸດທີ IX.

ທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ໄດ້ມີຄຳເຫັນວ່າ: ກອງປະຊຸມຄັ້ງນີ້ ໄດ້ພ້ອມກັນຄົ້ນຄວ້າ ແລະ ປະກອບ ຄຳເຫັນໃສ່ເນື້ອໃນຂອງຮ່າງກົດໝາຍສະບັບນີ້ຢ່າງລະອຽດ, ຮອບດ້ານ ໂດຍມີການປັບປຸງ, ເພີ່ມຕື່ມບາງເນື້ອໃນຂອງຮ່າງກົດໝາຍ ເຊິ່ງກຳມາທິການກົດໝາຍ ຈະໄດ້ລາຍງານຜົນການກວດກາເນື້ອໃນຮອບດ້ານຂອງຮ່າງກົດໝາຍສະບັບນີ້ຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນມີນາ2024 ເພື່ອພິຈາລະນາກ່ອນນຳໄປທາບທາມຄຳເຫັນກັບບັນດາທ່ານສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງແລະພະແນກການທີ່ກ່ຽວຂ້ອງ ກ່ອນນຳເຂົ້ານຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX ທີ່ຈະໄດ້ໄຂຂຶ້ນໃນໄວໆນີ້.

**(ອານຸສອນ ພູມມີທອນ)**

## ທາບທາມ...

(ຕໍ່ຈາກໜ້າ 1)

ໃນຂົງເຂດສະພາແຫ່ງຊາດ (ສພຊ) ໃຫ້ຄົບຖ້ວນ, ຮັດກຸມ ແລະ ແທດເໝາະກັບສະພາບຕົວຈິງ ກ່ອນທີ່ຈະນຳໄປພິຈາລະນາ, ຮັບຮອງເອົາຢູ່ກອງປະຊຸມສະໄໝສາມັນເທື່ອທີ 7 ຂອງ ສພຊ ຊຸດທີ IX; ລະຫວ່າງວັນທີ 26-27 ມີນາ 2024 ທີ່ຫ້ອງປະຊຸມສຳນັກງານປົກຄອງແຂວງຄຳມ່ວນ ໄດ້ຈັດກອງປະຊຸມທາບທາມຮ່າງກົດໝາຍ 3 ສະບັບຄື: ກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໂດຍການເປັນປະທານຮ່ວມຂອງທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ ແລະ ທ່ານ ບຸນມີ ພິມມະສອນ ປະທານຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 12; ເຂົ້າຮ່ວມມີບັນດາທ່ານ ສສຊ ປະຈຳເຂດເລືອກຕັ້ງທີ 12, ສສຂ ແລະ ຫົວໜ້າ-ຮອງຫົວໜ້າພະແນກການ, ອົງການອ້ອມຂ້າງແຂວງຄຳມ່ວນ.

ທ່ານ ພົທ. ສຸວອນ ເລືອງບຸນມີ ໄດ້ມີຄຳເຫັນກ່າວເປີດວ່າ: ກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ປັບປຸງມາແລ້ວຫຼາຍຄັ້ງ, ການປັບປຸງກົດໝາຍແຕ່ລະຄັ້ງ ກໍໄດ້ເປັນບ່ອນອີງສຳຄັນແກ່ການເຄື່ອນໄຫວຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃຫ້ນັບມື້ດີຂຶ້ນ; ເຖິງຢ່າງໃດກໍຕາມ, ການປັບປຸງໄລຍະຜ່ານມາ ກໍບໍ່ທັນໄດ້ປະຕິບັດສອດຄ່ອງກັບກົດໝາຍວ່າດ້ວຍການສ້າງນິຕິກຳ ໂດຍສະເພາະຂັ້ນຕອນການຈັດຕັ້ງປະຕິບັດ ແລະ ທາບທາມກົດໝາຍ ບໍ່ທັນເຮັດຢ່າງກວ້າງຂວາງ, ມີພຽງແຕ່ຄະນະຮັບຜິດຊອບທີ່ໄດ້ຖືກມອບໝາຍເປັນຜູ້ປັບປຸງ ແລ້ວກໍນຳເຂົ້າຜ່ານກອງປະຊຸມສະພາແຫ່ງຊາດ ພິຈາລະນາ ແລະ ຮັບຮອງ ເຮັດໃຫ້ມີບາງເນື້ອໃນບໍ່ທັນຮັດກຸມ ແລະ ຈະແຈ້ງ ຈຶ່ງເຮັດໃຫ້ການເຄື່ອນໄຫວຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃນບາງດ້ານ ບໍ່ທັນມີຄຸນນະພາບເທົ່າທີ່ຄວນ. ສະນັ້ນ, ຈຸດປະສົງຂອງການທາບທາມຄັ້ງນີ້ ເພື່ອໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍການສ້າງນິຕິກຳ ແລະ ເປັນການຍາດແຍ່ງເອົາຄຳຄິດຄຳເຫັນຂອງເປົ້າໝາຍຕ່າງໆໃນສັງຄົມເພື່ອນຳໄປຄົ້ນຄວ້າປັບປຸງກົດໝາຍເຮັດໃຫ້ກາຍເປັນກົດໝາຍຂອງປະຊາຊົນ, ມາຈາກປະຊາຊົນ ແລະ ຮັບໃຊ້ປະຊາຊົນຢ່າງແທ້ຈິງ. ຖ້າກົດໝາຍດັ່ງກ່າວ ໄດ້ຖືກຮັບຮອງແລ້ວ ຈະກາຍເປັນເຄື່ອງມືສຳຄັນໃນການປະຕິບັດສິດ, ໜ້າທີ່ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃຫ້ມີຄຸນນະພາບສູງຂຶ້ນຕື່ມ, ປະກອບສ່ວນສຳຄັນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດຂອງພວກເຮົາ ຮັບປະກັນເຮັດໃຫ້ສະຖຽນລະພາບທາງດ້ານການເມືອງມີຄວາມໜັກແໜ້ນ, ເສດຖະກິດຂະຫຍາຍຕົວຕໍ່ເນື່ອງ, ການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍກົດໝາຍ ມີຄວາມສັກສິດສູງຂຶ້ນ, ສັງຄົມມີຄວາມສະຫງົບ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.

ໃນກອງປະຊຸມໄດ້ຮັບຟັງບົດລາຍງານກ່ຽວກັບການປັບປຸງກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມໄດ້ສຸມສະຕິປັນຍາເພື່ອຄົ້ນຄວ້າປະກອບຄຳເຫັນຕໍ່ແຕ່ລະເນື້ອໃນຂອງ 3 ກົດໝາຍຢ່າງມີຈຸດສຸມເຊິ່ງຈະເປັນຂໍ້ມູນສຳຄັນໃຫ້ແກ່ຄະນະຮັບຜິດຊອບນຳໄປຄົ້ນຄວ້າ, ວິເຄາະວິໄຈປັບປຸງກົດໝາຍແຕ່ລະສະບັບ ເພື່ອເຮັດໃຫ້ກົດໝາຍມີເນື້ອໃນຄົບຖ້ວນ, ຮັດກຸມ ແລະ ສາມາດຈັດຕັ້ງປະຕິບັດໄດ້ດ້ວຍຄຸນນະພາບສູງ.

ກອງປະຊຸມຄັ້ງນີ້ ເຊິ່ງໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດແລະສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌(STEPs)ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ.

**(ສອນສັກ ວັນວິໄຊ)**



## 3 ກົດໝາຍ...

(ຕໍ່ຈາກໜ້າ 1)

ແນກການ, ອົງການອ້ອມຂ້າງແຂວງເຊກອງ.

ທັງນີ້ ກໍເພື່ອເປັນການປະຕິບັດຕາມກົດໝາຍວ່າດ້ວຍການສ້າງນິຕິກຳສະບັບປັບປຸງປີ 2021, ມາດຕາ 17 ກຳນົດກ່ຽວກັບການຈັດຕັ້ງທີ່ມີສິດສະເໜີສ້າງກົດໝາຍ ແລະ ມາດຕາ 39 ການທາບທາມຄຳເຫັນ, ໃນນີ້ ຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ) ແມ່ນໜຶ່ງໃນຈຳນວນອົງການທີ່ມີສິດສະເໜີສ້າງກົດໝາຍ ແລະ ການທາບທາມຄຳເຫັນ ເຊິ່ງກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ແມ່ນນອນຢູ່ໃນສິດ ແລະ ໜ້າທີ່ຂອງ ຄປຈສພຊ ເປັນຜູ້ສະເໜີສ້າງ ແລະປັບປຸງທັງເປັນການລະດົມສະຕິປັນຍາ, ຄຳຄິດເຫັນທີ່ເປັນປະໂຫຍດຂອງສສຊແລະສສຂ ໃນຖານະເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ ກໍຄືເປົ້າໝາຍທີ່ກ່ຽວຂ້ອງຕ່າງໆເພື່ອປັບປຸງກົດໝາຍ 3 ສະບັບ ໃຫ້ຄົບຖ້ວນ, ຮັດກຸມແລະແທດເໝາະກັບສະພາບຕົວຈິງ ກ່ອນທີ່ຈະນຳໄປພິຈາລະນາ, ຮັບຮອງເອົາຢູ່ກອງປະຊຸມສະໄໝສາມັນເທື່ອທີ 7 ຂອງ ສພຊ ຊຸດທີ IX.

ໃນກອງປະຊຸມໄດ້ຮັບຟັງບົດລາຍງານກ່ຽວກັບການປັບປຸງກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມໄດ້ສຸມສະຕິປັນຍາເພື່ອຄົ້ນຄວ້າປະກອບຄຳເຫັນຕໍ່ແຕ່ລະເນື້ອໃນຂອງ 3 ກົດໝາຍຢ່າງມີຈຸດສຸມເຊິ່ງຈະເປັນຂໍ້ມູນສຳຄັນໃຫ້ແກ່ຄະນະຮັບຜິດຊອບນຳໄປຄົ້ນຄວ້າ, ວິເຄາະວິໄຈປັບປຸງກົດໝາຍແຕ່ລະສະບັບ ເພື່ອເຮັດໃຫ້ກົດໝາຍມີເນື້ອໃນຄົບຖ້ວນ, ຮັດກຸມ ແລະ ສາມາດຈັດຕັ້ງປະຕິບັດໄດ້ດ້ວຍຄຸນນະພາບສູງ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌ (STEPs) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ.

**(ນາງ ກຸກກິກ ບຸດດາໄຊ)**






## ສພຂ ສະຫວັນນະເຂດ ສຳເລັດການທາບທາມຄຳຄິດເຫັນ ໃສ່ຮ່າງປັບປຸງກົດໝາຍ 3 ສະບັບ ຂົງເຂດສະພາແຫ່ງຊາດ




(ສພຊ) - ໃນລະຫວ່າງວັນທີ 21-22 ມີນາ 2024 ສະພາແຫ່ງຊາດ ໄດ້ຈັດກອງປະຊຸມທາບທາມຄຳຄິດເຫັນໃສ່ຮ່າງປັບປຸງກົດໝາຍ 03 ສະບັບ ຂົງເຂດສະພາແຫ່ງຊາດ ທີ່ຫ້ອງປະຊຸມສະພາປະຊາຊົນແຂວງສະຫວັນນະເຂດ ໂດຍການເປັນປະທານຮ່ວມຂອງທ່ານ ນາງ ປິ່ງຄຳ ລາຊະສິມມາປະທານກຳມາທິການເສດຖະກິດ ເຕັກໂນໂລຊີ ແລະ ສິ່ງເວດລ້ອມ ແລະທ່ານ ກິ່ງແກ້ວ ມີວໍລະຈັກປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 13 ປະທານສະພາປະຊາຊົນແຂວງສະຫວັນນະເຂດ; ມີບັນດາທ່ານ ສສຊ ປະຈຳເຂດເລືອກຕັ້ງທີ 13, ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ-ນະຄອນ, ທ່ານຮອງເຈົ້າແຂວງ, ເຈົ້ານະຄອນ, ອາດີດສະມາຊິກສະພາແຫ່ງຊາດ, ຫົວໜ້າ-ຮອງຫົວໜ້າພະແນກການຂອງອົງການປົກຄອງແຂວງ, ຂົງເຂດຕຸລາການ, ຄະນະນຳຈາກ 2 ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ອົງການຈັດຕັ້ງມະຫາຊົນ, ສະຖາບັນການສຶກສາ ພ້ອມດ້ວຍພະນັກງານ-ລັດຖະກອນ ຈາກ ສພຊ ແລະ ສພຂ ຈຳນວນຜູ້ເຂົ້າຮ່ວມທັງໝົດ 87 ທ່ານ ຍິງ 29 ທ່ານ .

ກອງປະຊຸມໄດ້ຮັບຟັງການສະເໜີກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ແລະ ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ກົດໝາຍທີ່ນຳມາທາບທາມໃນຄັ້ງນີ້ ມີຄວາມສຳຄັນ ແລະ ມີຄວາມໝາຍຫຼາຍ ຕໍ່ການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໄດ້ເຄື່ອນໄຫວປະຕິບັດພາລະບົດບາດຂອງຕົນມີປະສິດທິພາບ ແລະ ປະສິດທິຜົນ, ສອດຄ່ອງກັບສະພາບຕົວຈິງຂອງປະເທດເຮົາ.

ຫຼັງຈາກນັ້ນ, ກອງປະຊຸມແລກປ່ຽນຄຳຄິດຄຳເຫັນ ຢ່າງກົງໄປກົງມາ ແລະ ມີຈຸດສຸມ ເຊິ່ງເປັນການປະກອບສ່ວນໃນການປັບປຸງຮ່າງກົດໝາຍ 03 ສະບັບໃນຂົງເຂດສະພາແຫ່ງຊາດ, ເພື່ອໃຫ້ສອດຄ່ອງກັບສະພາບປັດຈຸບັນ ແລະ ສາມາດນຳໄປຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນກວ່າເກົ່າ ແນໃສ່ການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ.

**(ນັກຂ່າວ ສພຊ)**

## ທາບທາມຮ່າງກົດໝາຍ 3 ສະບັບ ຢູ່ແຂວງຫຼວງພະບາງ




(ສພຊ) - ໃນວັນທີ 25-26 ມີນາ 2024, ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຫລວງພະບາງໄດ້ຈັດກອງປະຊຸມທາມທາບຮ່າງກົດໝາຍ ຈຳນວນ 03 ສະບັບ (ໃນຂົງເຂດສະພາແຫ່ງຊາດ) ໂດຍການເປັນປະທານຂອງ ທ່ານ ປອ. ລີເບີ ລີບົວປາວ ຄະນະປະຈຳ, ປະທານກຳມາທິການເສດຖະກິດ, ການເງິນ ແລະ ການກວດສອບ ສະພາແຫ່ງຊາດ; ເຂົ້າຮ່ວມ ມີທ່ານ ວົງສະຫວັນ ເທບພະຈັນ ປະທານສະພາປະຊາຊົນແຂວງ, ທ່ານ ຄຳມ່ວນ ຊົມສີຫາ ປັນຍາ ຮອງປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ສະພາແຫ່ງຊາດ ພ້ອມດ້ວຍຄະນະ, ມີທ່ານ ບຸນເລື່ອມ ມະນີວົງ ຮອງເຈົ້າແຂວງຫຼວງພະບາງ ຕະຫຼອດຮອດສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 6, ສະມາຊິກສະພາປະຊາຊົນແຂວງ ແລະບັນດາພະແນກການອ້ອມຂ້າງແຂວງທີ່ກ່ຽວຂ້ອງ ໄດ້ໃຫ້ກຽດເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການລາຍງານການປະກອບຄຳຄິດຄຳເຫັນຂອງບັນດາທ່ານສະມາຊິກສະພາແຫ່ງຊາດ ແລະສະມາຊິກສະພາປະຊາຊົນແຂວງຕໍ່ກັບການຄົ້ນຄວ້າ ແລະ ປັບປຸງຮ່າງກົດໝາຍ ຈຳນວນ 03 ສະບັບ ຄື: ຮ່າງກົດໝາຍ ວ່າດ້ວຍການເລືອກຕັ້ງ ສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບປັບປຸງ ປີ 2024, ຮ່າງກົດໝາຍ ວ່າດ້ວຍສະພາແຫ່ງຊາດ ແລະ ຮ່າງກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງທີ່ໄດ້ນຳມາພິຈາລະນາຄົ້ນຄວ້າເປັນຕົ້ນແມ່ນ: ການປັບປຸງໂຄງສ້າງ, ພາກ, ໝວດ, ບາງມາດຕາ-ບາງເນື້ອໃນໄດ້ເພີ່ມເຂົ້າ ແລະບາງມາດຕາ-ບາງເນື້ອໃນ ໄດ້ຖືກຕັດອອກທີ່ເຫັນວ່າບໍ່ຖືກຕ້ອງ, ສອດຄ່ອງກັບກົດໝາຍອື່ນ; ເພື່ອເປັນການປັບປຸງ ບັນດາກົດໝາຍ ໃນຂົງເຂດສະພາແຫ່ງຊາດໃຫ້ສອດຄ່ອງກັບສະພາບເສດຖະກິດ-ສັງຄົມ ໃນໄລຍະໃໝ່.

**(ນັກຂ່າວ ສພຊ)**

## ທາບທາມຄຳຄິດເຫັນໃສ່ຮ່າງປັບປຸງກົດໝາຍ 3 ສະບັບ ຢູ່ແຂວງຫຼວງນ້ຳທາ



(ສພຊ) - ເພື່ອປະກອບຄຳເຫັນຕໍ່ການປັບປຸງຮ່າງກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃຫ້ເປັນລະບົບ, ຄົບຖ້ວນ, ຮັດກຸມ ແລະ ສາມາດປະຕິບັດໄດ້ຢ່າງມີປະສິດທິພາບ, ປະສິດທິຜົນ.

ກອງປະຊຸມທາບທາມຄຳຄິດເຫັນໃສ່ຮ່າງປັບປຸງກົດໝາຍ 3 ສະບັບ ໃນຂົງເຂດສະພາແຫ່ງຊາດ ປະກອບມີ: ກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໄດ້ຈັດຂຶ້ນໃນວັນທີ 25-26 ມີນາ 2024 ທີ່ສະໂມສອນຂອງແຂວງ ໂດຍການເປັນປະທານຮ່ວມຂອງທ່ານ ຄຳແພງ ວິລະພັນ ຄະນະປະຈຳສະພາແຫ່ງຊາດ ແລະ ທ່ານ ຄຳຟອງ ອິນມານີ ຮອງເລຂາພັກແຂວງປະທານສະພາປະຊາຊົນແຂວງ, ມີບັນດາທ່ານ ສສຊ ປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າພະແນກການຂອງອົງການປົກຄອງແຂວງ, ຂົງເຂດຕຸລາການ, ຄະນະນຳຈາກ 2 ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເຈົ້າເມືອງ, ອົງການຈັດຕັ້ງມະຫາຊົນ, ພ້ອມດ້ວຍພະນັກງານ-ລັດຖະກອນຈາກສພຊແລະສພຂເຂົ້າຮ່ວມ.

ກົດໝາຍທີ່ນຳມາທາບທາມໃນຄັ້ງນີ້ ມີຄວາມສຳຄັນ ແລະມີຄວາມໝາຍຫຼາຍຕໍ່ການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຍ້ອນວ່າ 3 ກົດໝາຍນີ້ ແມ່ນຕິດພັນເຊິ່ງກັນ ແລະ ກັນ. ກ່ອນສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ຈະເຄື່ອນໄຫວໄດ້ຕ້ອງມີການເລືອກຕັ້ງເອົາສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ເຊິ່ງແມ່ນປະຊາຊົນບັນດາເຜົ່າໄດ້ມອບສິດແລະອຳນາດໃຫ້ແກ່ຕົວແທນຂອງຕົນມາປະຕິບັດຢູ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຕາມລັດຖະທຳມະນູນ ແລະກົດໝາຍກຳນົດ.

ໃນໄລຍະຜ່ານມາ ກົດໝາຍ 3 ສະບັບ ນັບແຕ່ວັນຮັບຮອງສະບັບທຳອິດເປັນຕົ້ນມາ ກໍໄດ້ຮັບການປັບປຸງເປັນແຕ່ລະໄລຍະມາຫຼາຍຄັ້ງແລ້ວ ເຊັ່ນ: ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ປັບປຸງມາແລ້ວ 5 ຄັ້ງ, ກົດໝາຍວ່າດ້ວຍສະພາແຫ່ງຊາດ ປັບປຸງມາແລ້ວ 6 ຄັ້ງ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ປັບປຸງ 2 ຄັ້ງ. ການປັບປຸງກົດໝາຍແຕ່ລະຄັ້ງ ກໍໄດ້ເປັນບ່ອນອີງສຳຄັນແກ່ການເຄື່ອນໄຫວຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງໃຫ້ນັບມື້ດີຂຶ້ນ ສະນັ້ນ, ຈຸດປະສົງຂອງການທາບທາມຄັ້ງນີ້ ເພື່ອໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍການສ້າງນິຕິກຳ ແລະ ເປັນການຍາດແຍ່ງເອົາຄຳຄິດຄຳເຫັນຂອງເປົ້າໝາຍຕ່າງໆ ໃນສັງຄົມ ເພື່ອນຳໄປຄົ້ນຄວ້າປັບປຸງກົດໝາຍ ເຮັດໃຫ້ກາຍເປັນກົດໝາຍຂອງປະຊາຊົນ, ມາຈາກປະຊາຊົນ ແລະ ຮັບໃຊ້ປະຊາຊົນຢ່າງແທ້ຈິງ. ຖ້າກົດໝາຍໄດ້ຖືກຮັບຮອງແລ້ວ ຈະກາຍເປັນເຄື່ອງມືສຳຄັນໃນການປະຕິບັດສິດ, ໜ້າທີ່ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງໃຫ້ມີຄຸນນະພາບສູງຂຶ້ນຕື່ມ, ປະກອບສ່ວນສຳຄັນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດຂອງພວກເຮົາຮັບປະກັນເຮັດໃຫ້ສະຖຽນລະພາບທາງດ້ານການເມືອງມີຄວາມໜັກແໜ້ນ, ເສດຖະກິດຂະຫຍາຍຕົວຕໍ່ເນື່ອງ, ການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍກົດໝາຍ ມີຄວາມສັກສິດສູງຂຶ້ນ, ສັງຄົມມີຄວາມສະຫງົບ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ ພ້ອມດຽວກັນ ຜູ້ແທນເຂົ້າຮ່ວມກອງປະຊຸມຍັງໄດ້ປະກອບຄຳຄິດເຫັນຕໍ່ຮ່າງກົດໝາຍ 3 ສະບັບ ຢ່າງມີຈຸດສຸມ ເພື່ອເຮັດໃຫ້ເນື້ອໃນຂອງກົດໝາຍມີເນື້ອໃນຖືກຕ້ອງສອດຄ່ອງກັບຄວາມເປັນຈິງ, ສາມາດຮັບຮອງເອົາ ແລະ ນຳໄປຈັດຕັ້ງປະຕິບັດໃຫ້ມີຄຸນນະພາບ, ເກີດຜົນປະໂຫຍດສູງສຸດ.

**(ນັກຂ່າວ ສພຊ)**



# ອົງການກວດສອບປະຈຳພາກເໜືອ 2 ເຂົ້າພົບປະ ແລະ ເຮັດວຽກ ຢູ່ ສພຂ ຜົ້ງສາລີ



(ສພຊ)-ຕອນເຊົ້າ, ວັນທີ 20 ມີນາ 2024, ທີ່ສະພາປະຊາຊົນແຂວງຜົ້ງສາລີ, ທ່ານ ນາງຄອນສີວົງໄຊຮອງປະທານອົງການກວດສອບປະຈຳພາກເໜືອ 2 ພ້ອມດ້ວຍຄະນະທີມງານກວດສອບ ໄດ້ເຂົ້າພົບຄະນະນຳສະພາປະຊາຊົນແຂວງ ໂດຍເປັນກຽດຕ້ອນຮັບຢ່າງອົບອຸ່ນຈາກທ່ານ ທຸມເພັງ ຈອມວິສານ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງ ແລະ ເຂົ້າຮ່ວມມີ ປະທານຄະນະກຳມະການເສດຖະກິດ, ແຜນການແລະການເງິນ, ເລຂາທິການສະພາປະຊາຊົນແຂວງ ແລະ ພ້ອມດ້ວຍພະນັກງານ-ວິຊາການ ສະພາປະຊາຊົນແຂວງ.

ຈຸດປະສົງ ເພື່ອລາຍງານແຜນການເຄື່ອນໄຫວວຽກງານກວດສອບຂອງທີມງານ ແລະ ສະເໜີແລກປ່ຽນກ່ຽວກັບການຈັດຕັ້ງປະຕິບັດຜົນການກວດສອບໃນໄລຍະຜ່ານມາ ເປັນຕົ້ນ: ບັນດາຂໍ້ສະດວກ, ຂໍ້ຫຍຸ້ງຍາກ ພ້ອມ ທັງສະເໜີແຈ້ງເປົ້າໝາຍກວດສອບ ປະຈຳປີ 2023 ຢູ່ແຂວງຜົ້ງສາລີ ມີ 2 ເປົ້າໝາຍຄື: ວຽກງານຄຸ້ມຄອງລາຍຮັບຊັບສິນ ແລະການຄຸ້ມຄອງກອງທຶນທາງປະຈຳແຂວງຜົ້ງສາລີ ເຊັ່ນ: ກວດສອບກ່ຽວກັບລະບົບຄວບຄຸມພາຍໃນ, ລາຍຮັບ-ລາຍຈ່າຍ ຈາກການຂາຍປ້າຍທະບຽນລົດ ແລະ ການປະມູນປ້າຍທະບຽນລົດ, ລາຍຮັບ-ລາຍຈ່າຍເງິນກອງທຶນບູລະນະຮັກສາທາງຫຼວງ, ບັນດາໂຄງການນອກແຜນທີ່ໃຊ້ເງິນກອງທຶນທາງຊຳລະ, ການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ (ຂອດການຊຳລະບ້ວງກອງທຶນທາງ ແລະ ບ້ວງງົບປະມານປົກກະຕິ), ການຄຸ້ມຄອງຕິດຕາມການຈັດຕັ້ງປະຕິບັດໂຄງການ (ເງິນກອງທຶນຊຳລະ), ການຄຸ້ມຄອງໜີ້ສິນໂຄງການທີ່ນຳໃຊ້ເງິນກອງທຶນທາງຈັດຕັ້ງປະຕິບັດ ແລະກວດສອບເອກະສານອື່ນໆທີ່ກ່ຽວຂ້ອງກັບບັນດາພະແນກການ ເພື່ອໃຫ້ສອດຄ່ອງຕາມກົດໝາຍ ແລະ ລະບຽບການທີ່ໄດ້ກຳນົດໄວ້.

ພາຍຫຼັງທີມງານໄດ້ສະເໜີຈຸດປະສົງ ແລະ ລາຍງານແຜນການເຄື່ອນໄຫວເຮັດວຽກຢູ່ແຂວງຜົ້ງສາລີແລ້ວ, ທ່ານທຸມເພັງ ຈອມວິສານ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງ ໄດ້ມີຄຳເຫັນ, ກ່ອນອື່ນ ທ່ານໄດ້ຍ້ອງຍໍຊົມເຊີຍຕໍ່ຄະນະທີມງານຂອງອົງການກວດສອບປະຈຳພາກເໜືອ 2 ທີ່ໄດ້ເອົາໃຈໃສ່ໃນການກວດສອບກວດກາກ່ຽວກັບການຈັດຕັ້ງປະຕິບັດຜົນການກວດສອບໃນໄລຍະຜ່ານມາຢູ່ແຂວງຜົ້ງສາລີຫຼາຍບັນຫາທີ່ໄດ້ກວດພົບເຫັນແລະແກ້ໄຂຖືກຕ້ອງຕາມລະບຽບກົດໝາຍ, ພ້ອມກັນນັ້ນທ່ານຍັງໄດ້ເນັ້ນຕື່ມກ່ຽວກັບຮູບການ, ວິທີການກວດສອບແລະແກ້ໄຂຜົນຂອງການກວດສອບໃຫ້ມີຄວາມຖືກຕ້ອງສອດຄ່ອງກັບສະພາບຄວາມເປັນຈິງ ແລະ ອວຍພອນໃຫ້ຄະນະທີມງານທີ່ມາເຄື່ອນໄຫວເຮັດວຽກ ໃນຄັ້ງນີ້ ມີໝາກຜົນສຳເລັດຢ່າງຈົບງາມ ຕາມຈຸດປະສົງລະດັບຄາດໝາຍທີ່ວາງໄວ້.

**(ພອນແກ້ວປະເສີດ ສຸລິວົງ)**

# ສະພາປະຊາຊົນແຂວງຫຼວງນ້ຳທາ ເຜີຍແຜ່ກົດໝາຍວ່າດ້ວຍການປະກັນສັງຄົມ



(ສພຊ) - ວັນທີ 22 ມີນາ 2024 ຢູ່ທີ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງຫລວງນ້ຳທາ ໄດ້ຈັດພິທີເຜີຍແຜ່ກົດໝາຍວ່າດ້ວຍ ການປະກັນສັງຄົມ ສະບັບປັບປຸງປີ 2019 ຂຶ້ນ; ພາຍໃຕ້ການເປັນປະທານຂອງທ່ານ ວຽງໄຊ ສັກລຳດວນ ຮອງເລຂາທິການສະພາປະຊາຊົນແຂວງ, ໃຫ້ກຽດເຜີຍແຜ່ໂດຍ ທ່ານ ນາງ ລັດຕະນະ ພົມມະຈັນ ຫົວໜ້າຫ້ອງການປະກັນສັງຄົມແຂວງ ມີຫົວໜ້າ, ຮອງຫົວໜ້າຂະແໜງ ພ້ອມດ້ວຍພະນັກງານວິຊາການ ເຂົ້າຮ່ວມຢ່າງພ້ອມພຽງ.

ກົດໝາຍວ່າດ້ວຍ ການປະກັນສັງຄົມ ສະບັບປັບປຸງປີ 2019ສະບັບນີ້ລວມທັງໝົດມີ 12 ພາກ, 123 ມາດຕາ ພ້ອມດຽວກັນ ຍັງໄດ້ນຳເອົາຄວາມຮູ້ທີ່ເປັນພື້ນຖານກ່ຽວກັບວຽກງານການປະກັນສັງຄົມພາຍໃນແຂວງຕ່າງໆ ມາເຜີຍແຜ່ໃຫ້ພະນັກງານລັດຖະກອນພາຍໃນສະພາປະຊາຊົນແຂວງໄດ້ຮັບຮູ້ເຊື່ອມຊຶມ ແລະເຂົ້າໃຈຢ່າງເລິກເຊິ່ງຕໍ່ກັບວຽກງານການປະກັນສັງຄົມ ນອກນັ້ນຍັງ ໄດ້ມີການສົນທະນາແລກປ່ຽນ, ປະກອບຄຳຄິດເຫັນຕໍ່ກັບວຽກງານດັ່ງກ່າວທີ່ຍັງພົບເຫັນຄວາມຫຍຸ້ງຍາກ, ບໍ່ທັນເຂົ້າໃຈ ໃນໄລຍະຜ່ານມາ ຢ່າງເປັນຂະບວນຟົດຟື້ນ, ທັງນີ້ ກໍເພື່ອເຮັດໃຫ້ວຽກງານການປະກັນສັງຄົມໄດ້ຮັບການປັບປຸງ ແລະ ຖືກຕ້ອງສອດຄ່ອງຕາມຄວາມເປັນຈິງຂຶ້ນກວ່າເກົ່າ.

**(ນັກຂ່າວ ສພຂ)**

# ສພຂ ຫຼວງນ້ຳທາ ສະຫຼຸບວຽກງານປະຈຳເດືອນກຸມພາ



(ສພຊ) - ໃນວັນທີ 20 ມີນາ2024 ທີ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງ ສະພາປະຊາຊົນແຂວງຫຼວງນ້ຳທາ ໄດ້ເປີດກອງປະຊຸມສະຫຼຸບວຽກງານປະຈຳເດືອນກຸມພາ ແລະ ທິດທາງແຜນການປະຈຳເດືອນມີນາເພື່ອຕີລາຄາຄືນເບິ່ງຜົນການຈັດຕັ້ງປະຕິບັດວຽກງານວິຊາສະເພາະຂອງສະພາປະຊາຊົນແຂວງໃນໄລຍະຜ່ານມາແລະວາງທິດທາງແຜນການໃນຕໍ່ໜ້າ ໂດຍການເປັນປະທານຂອງ ທ່ານ ຄຳຟອງ ອິນມານີ ຮອງເລຂາພັກແຂວງ ປະທານສະພາປະຊາຊົນແຂວງ, ມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງ, ຄະນະເລຂາທິການ, ຫົວໜ້າ, ຮອງຫົວໜ້າຂະແໜງ ແລະ ພະນັກງານ-ລັດຖະກອນພາຍໃນສະພາ,ເຂົ້າຮ່ວມທັງໝົດ38ທ່ານ, ຍິງ19ທ່ານ.

ກອງປະຊຸມໄດ້ຮັບຟັງຜ່ານບົດສະຫຼູບການເຄື່ອນໄຫວວຽກງານປະຈຳເດືອນກຸມພາ ແລະ ທິດທາງແຜນການປະຈຳເດືອນມີນາ 2024 ເຊິ່ງດ້ານນິຕິກຳແມ່ນໄດ້ຊຸກຍູ້ອົງການປົກຄອງແຂວງສັງລວມບັນດານິຕິກຳໃຕ້ກົດໝາຍໄລຍະ 5 ປີ (2021-2025)ທີ່ສະພາປະຊາຊົນແຂວງຮັບຮອງວ່າມີນິຕິກຳໃດເພີ່ມເຕີມຫຼືຕັດອອກຈາກແຜນເພື່ອສະເໜີໃຫ້ສະພາປະຊາຊົນແຂວງພິຈາລະນາຮັບຮອງ, ເປີດກອງປະຊຸມປັບປຸງ ແລະ ຮຽບຮຽງຮ່າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງການຈັດງານແລະງານບຸນປະເພນີຕ່າງໆຢູ່ພາຍໃນແຂວງຫຼວງນ້ຳທາ ເຊິ່ງປັດຈຸບັນຍັງຢູ່ໃນຂັ້ນຕອນຂອງຄະນະປະຈຳສະພາປະຊາຊົນແຂວງຄົ້ນຄວ້າເປັນຄັ້ງສຸດທ້າຍເພື່ອສະເໜີຕໍ່ທ່ານເຈົ້າແຂວງລົງລາຍເຊັນປະກາດໃຊ້, ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ໄດ້ເປີດກອງປະຊຸມສະຫຼຸບຕີລາຄາຖອດຖອນບົດຮຽນກ່ຽວກັບການກະກຽມແລະດຳເນີນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງ, ໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ6 ຢູ່ເມືອງສິງ ເມືອງລອງ ແລະ ເມືອງຫຼວງນ້ຳທາ ທັງໝົດ 26 ຈຸດ, 23 ບ້ານ ແລະ ສຳນັກງານອົງການຂອງລັດ 3 ຈຸດ ມີຜູ້ເຂົ້າຮ່ວມທັງໝົດ 1,951 ຄົນ, ຍິງ 721 ຄົນ,ດ້ານການຕິດຕາມກວດກາແມ່ນໄດ້ຕິດຕາມການຈັດຕັ້ງປະຕິບັດກົດໝາຍຂອງອົງການບໍລິຫານ, ອົງການຕຸລາການ ແລະ ການປະຕິບັດໜ້າທີ່ຂອງບຸກຄະລາກອນທີ່ສະພາປະຊາຊົນແຂວງເລືອກຕັ້ງ ຫຼື ຮັບຮອງເອົາການແຕ່ງຕັ້ງເປັນປົກກະຕິ, ຕິດຕາມກວດກາການຈັດຕັ້ງປະຕິບັດມະຕິກອງປະຊຸມສະໄໝສາມັນເທື່ອທີ6ຂອງສະພາປະຊາຊົນແຂວງຕາມກົນໄກຕ່າງໆຕາມກົດໝາຍ, ສ້າງແຜນການລົງຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍ,ຜ່ານຂໍ້ຕົກລົງຂອງຄະນະປະຈຳສະພາປະຊາຊົນແຂວງ ວ່າດ້ວຍການຍົກຍ້າຍໜ້າທີ່ຮັບຜິດຊອບຂອງຫົວໜ້າຂະແໜງພາຍໃນສະພາປະຊາຊົນແຂວງ ສະບັບເລກທີ 13/ຄປຈຂ ລົງວັນທີ 6 ກຸມພາ 2024 ຄະນະປະຈຳສະພາປະຊາຊົນແຂວງໄດ້ຕົກລົງຍົກຍ້າຍ ທ່ານ ອຶງ ແສງທາລາ ຫົວໜ້າຂະແໜງວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ໄປຮັບໜ້າທີ່ໃໝ່ເປັນຫົວໜ້າຂະແໜງຄົ້ນຄວ້າ-ສັງລວມ ແລະຂໍ້ມູນຂ່າວສານ ຕາມການສະເໜີຂອງຄະນະເລຂາທິການສະພາປະຊາຊົນແຂວງ; ຂໍ້ຕົກລົງຂອງຄະນະປະຈຳສະພາປະຊາຊົນແຂວງ ວ່າດ້ວຍການແຕ່ງຕັ້ງຫົວໜ້າ, ຮອງຂະແໜງພາຍໃນສະພາປະຊາຊົນແຂວງສະບັບເລກທີ26/ຄປຈຂ ລົງວັນທີ 5 ມີນາ 2024 ຄະນະປະຈຳສະພາປະຊາຊົນແຂວງໄດ້ຕົກລົງແຕ່ງຕັ້ງ ທ່ານ ນາງ ຄອນສະຫວັນ ອິນທອງຈັນ ຮອງຫົວໜ້າຂະແໜງບໍລິຫານ-ຈັດຕັ້ງ ແລະ ກວດກາ ສະພາປະຊາຊົນແຂວງ ເປັນຫົວໜ້າຂະແໜງວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ແລະ ທ່ານ ນາງ ຈິນດານີ ໜຸ່ມປະດິດ ວິຊາການຂະແໜງບໍລິຫານ-ຈັດຕັ້ງ ແລະ ກວດກາສະພາປະຊາຊົນແຂວງ ເປັນຮອງຫົວໜ້າຂະແໜງບໍລິຫານ-ຈັດຕັ້ງ ແລະ ກວດກາ ແລະ ຍັງໄດ້ຮັບຟັງກົງຈັກການຈັດຕັ້ງສະພາປະຊາຊົນແຂວງຫຼວງນ້ຳທາ ຊຸດທີ II.

ຕອນທ້າຍຂອງກອງປະຊຸມໄດ້ຈັດພິທີມອບໃບຍ້ອງຍໍປະຈຳປີ2023 ຂອງທ່ານເຈົ້າແຂວງຕາມຂໍ້ຕົກລົງເລກທີ 122/ຈຂ ລົງວັນທີ 28 ຕຸລາ 2022 ໃຫ້ພະນັກງານດີເດັ່ນຈຳນວນ 31 ທ່ານ ໂດຍແມ່ນ ທ່ານ ຄຳຟອງ ອິນມານີ ຮອງເລຂາພັກແຂວງ ປະທານສະພາປະຊາຊົນແຂວງໃຫ້ກຽດມອບ, ໃນໂອກາດນີ້ທ່ານຄຳຟອງອິນມານີຮອງເລຂາພັກແຂວງປະທານສະພາປະຊາຊົນແຂວງໄດ້ມີຄຳເຫັນເນັ້ນໜັກໃຫ້ພະນັກງານຈົ່ງເອົາໃຈໃສ່ສ້າງຄວາມສາມັກຄີຊ່ວຍເຫຼືອເຊິ່ງ ແລະ ກັນ, ເອົາໃຈໃສ່ຄົ້ນຄວ້າເຊື່ອມຊຶມບັນດາແນວທາງ, ມະຕິຄຳສັ່ງແລະກົດໝາຍຕ່າງໆເພື່ອຝຶກຝົນຫຼໍ່ຫຼອມຕົນເອງໃຫ້ມີຄວາມຮູ້ຄວາມສາມາດ, ເອົາໃຈໃສ່ປະຕິບັດໜ້າທີ່ວຽກງານວິຊາສະເພາະຂອງຕົນໃຫ້ມີຄຸນນະພາບຂຶ້ນກວ່າເກົ່າ.

**(ນາງ ອຳພອນ ສີປະເສີດ)**



# ພິທີມອບ-ຮັບລົດຮັບສົ່ງຄົນເຈັບ




(ສພຊ) - ໃນວັນທີ 25 ມີນາ 2024, ສະພາປະຊາຊົນແຂວງວຽງຈັນ ໄດ້ຈັດພິທີມອບ-ຮັບລົດຮັບສົ່ງຄົນເຈັບ ຈຳນວນ 10 ຄັນ ລະຫວ່າງສະພາປະຊາຊົນແຂວງກີຢອງຊັງນຳ-ໂດ ສ.ເກົາຫລີ ແລະ ສະພາປະຊາຊົນແຂວງວຽງຈັນ ສປປ ລາວ, ຢູ່ທີ່ຫ້ອງປະຊຸມຊັ້ນ 2 ຂອງຫ້ອງວ່າການແຂວງວຽງຈັນ, ໂດຍເປັນກຽດເຂົ້າຮ່ວມຂອງທ່ານຄຳພັນ ສິດທິດຳພາ ເຈົ້າແຂວງວຽງຈັນ, ທ່ານ ປາກ ແຮຢັງ ປະທານຄະນະກຳມະການ ກໍ່ສ້າງ ແລະ ປ້ອງກັນອັກຄີໄພ ສະພາປະຊາຊົນແຂວງ ກີຢອງຊັງນຳ-ໂດ ສ.ເກົາຫຼີ ພ້ອມດ້ວຍຄະນະ; ມີບັນດາທ່ານຄະນະປະຈຳພັກແຂວງ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ຄະນະກຳມະການພັກແຂວງ, ຄະນະເລຂາທິການ ແລະພະນັກງານວິຊາການເຂົ້າຮ່ວມ.

ທ່ານ ບຸນສອນ ເຜີດລາວັນປະທານສະພາປະຊາຊົນແຂວງວຽງຈັນກ່າວ ເນື່ອງໃນໂອກາດທີ່ຄະນະຜູ້ແທນສະພາປະຊາຊົນແຂວງ ກີຢອງຊັງນຳ-ໂດ ສ.ເກົາຫຼີ ມາຢ້ຽມຢາມ ແລະ ມອບລົດໃຫ້ສະພາປະຊາຊົນແຂວງວຽງຈັນ ຄັ້ງນີ້ວ່າ: ຂ້າພະເຈົ້າຮູ້ສຶກພາກພູມໃຈເປັນຢ່າງຍິ່ງ ທີ່ໄດ້ຕາງໜ້າຄະນະປະຈຳສະພາປະຊາຊົນແຂວງວຽງຈັນ ຕ້ອນຮັບຄະນະຜູ້ແທນສະພາປະຊາຊົນແຂວງກີຢອງຊັງນຳ-ໂດ ສ.ເກົາຫຼີ ທີ່ມາຢ້ຽມຢາມ ແລະ ມອບລົດ ອາບູລັງ ໃຫ້ແກ່ສະພາປະຊາຊົນແຂວງວຽງຈັນ, ເຊິ່ງນຳພາໂດຍ ທ່ານ ປາກ ແຮຢັງ ປະທານຄະນະກຳມະການ ກໍ່ສ້າງ ແລະ ປ້ອງກັນອັກຄີໄພ ສະພາປະຊາຊົນແຂວງ ກີຢອງຊັງນຳ-ໂດ ສ.ເກົາຫຼີ ຖືໄດ້ວ່າເປັນຄັ້ງທີ 3 ທີ່ຄະນະຜູ້ແທນຂອງແຂວງ ກີຢອງຊັງນຳ ສ.ເກົາຫຼີ ໄດ້ມາຢ້ຽມຢາມສະພາປະຊາຊົນແຂວງວຽງຈັນ, ໃນໄລຍະຜ່ານມາກໍໄດ້ຮັບການຊ່ວຍເຫຼືອ ຈາກ ສ.ເກົາຫຼີ ມາໂດຍຕະຫຼອດໃນນັ້ນກໍມີ: ມູນນິທິໂຮຕາຣີສ.ເກົາຫຼີໄດ້ຊ່ວຍສ້ອມແປງໂຮງຮຽນອານຸບານ-ຫໍພັກຄູ 187 ລ້ານກີບ, ຊ່ວຍສຸກສາລາ 2 ແຫ່ງ 127 ລ້ານກີບ, ໂຮງຮຽນສາທາລະນະສຸກ 60 ລ້ານກີບ ແລະອຸປະກອນການສຶກສາໃຫ້ໂຮງຮຽນຕ່າງໆ, ຊ່ວຍໂນດບຸກ 20 ໜ່ວຍໃຫ້ພະແນກສາທາ,ມູນນິທິ ໂກຣບອນໄລແຊຣິງໄດ້ຊ່ວຍຢາປິ່ນປົວພະຍາດໃຫ້ສາທາແຂວງ ຊຸດທີ 1 ເພື່ອຈັດສັນໃຫ້ ໂຮງໝໍແຂວງ, ໂຮງໝໍ 11 ເມືອງ ແລະ ສຸກສາລາ 50 ແຫ່ງມູນຄ່າ 17 ຕື້ກວ່າກີບ ຊຸດທີ II ມູນຄ່າ 2,9 ຕື້ກວ່າກີບ ແລະໃນມື້ນີ້ຂ້າພະເຈົ້າຕາງໜ້າຄະນະປະຈຳສະພາປະຊາຊົນແຂວງ ຂໍສະແດງຄວາມຂອບອົກຂອບໃຈຢ່າງສູງ ມາຍັງທ່ານປາກແຮຢັງ ປະທານຄະນະກຳມະການ ກໍ່ສ້າງ ແລະ ປ້ອງກັນອັກຄີໄພ ສະພາປະຊາຊົນແຂວງ ກີຢອງຊັງນຳ-ໂດ ສ.ເກົາຫຼີ ທີ່ໄດ້ໃຫ້ການຊ່ວຍເຫຼືອ ມອບລົດ ອາບູລັງ ຈຳນວນ 10 ຄັນ, ລວມມູນຄ່າ 200,000 ໂດລາ ເພື່ອນຳໃຊ້ເຂົ້າໃນວຽກງານສາທາລະນະສຸກແຂວງ ໂດຍຈະໄດ້ມອບໃຫ້ສຸກສາລາ ແລະ ອົງການ ທີ່ມີຄວາມຈຳເປັນຈະໄດ້ນຳໃຊ້ເຂົ້າໃນການນຳສົ່ງຄົນເຈັບໄປຫາບ່ອນມີເງື່ອນໄຂ ໂດຍສະເພາະຜູ້ເປັນແມ່ມານ ແລະ ເດັກເກີດໃໝ່ ເພື່ອເປັນການຫຼຸດຜ່ອນອັດຕາການເສຍຊີວິດລົງເທື່ອລະກ້າວ.

ໃນຕອນທ້າຍຍັງໄດ້ມີການມອບ-ຮັບລົດອາບູລັງ ຈຳນວນ 10 ຄັນ, ກ່າວມອບໂດຍທ່ານ ປາກ ແຮຢັງ ປະທານຄະນະກຳມະການ ກໍ່ສ້າງ ແລະປ້ອງກັນອັກຄີໄພສະພາປະຊາຊົນແຂວງ ກີຢອງຊັງນຳ-ໂດ ສ.ເກົາຫຼີ ແລະ ຮັບໂດຍທ່ານບຸນສອນ ເຜີດລາວັນປະທານສະພາປະຊາຊົນແຂວງວຽງຈັນ,ເຂົ້າຮ່ວມເປັນສັກຂີພິຍານຂອງທ່ານ ຄຳພັນ ສິດທິດຳພາເຈົ້າແຂວງວຽງຈັນພ້ອມກັບມອບໃບຍ້ອງຍໍໃຫ້ແກ່ສະພາປະຊາຊົນແຂວງ ກີຢອງຊັງນຳ-ໂດ ສ.ເກົາຫຼີອີກດ້ວຍ.

**(ນັກຂ່າວ ສພຂ)**

# ກອງປະຊຸມໃຫຍ່ຄັ້ງທີ III ຂອງ ໜ່ວຍສະຫະພັນແມ່ຍິງ ສພຂ ວຽງຈັນ



(ສພຊ) - ໃນວັນທີ 21 ມີນາ 2024, ໜ່ວຍສະຫະພັນແມ່ຍິງສະພາປະຊາຊົນແຂວງວຽງຈັນ ໄດ້ຈັດກອງປະຊຸມໃຫຍ່ຄັ້ງທີ III ຂອງໜ່ວຍສະຫະພັນແມ່ຍິງ ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງວຽງຈັນ ໂດຍການເປັນປະທານຮ່ວມເປັນຄະນະປະທານຂອງ ທ່ານ ນາງ ໃສແສງຈັນ ແສງພະຈັນ ປະທານໜ່ວຍສະຫະພັນແມ່ຍິງ ສະພາປະຊາຊົນແຂວງວຽງຈັນ, ທ່ານ ນາງ ສົມພອນ ສຸທຳມະວົງ ຮອງປະທານຄະນະບໍລິຫານງານສະຫະພັນແມ່ຍິງແຂວງວຽງຈັນ; ເຂົ້າຮ່ວມມີປະທານໜ່ວຍຮາກຖານກຳມະບານ ສະພາປະຊາຊົນແຂວງວຽງຈັນ, ຄະນະຊາວໜຸ່ມ ສະພາປະຊາຊົນແຂວງວຽງຈັນ,ພ້ອມດ້ວຍແຂກຖືກເຊີນ ແລະ ສະມາຊິກສະຫະພັນແມ່ຍິງທັງໝົດພາຍໃນສະພາປະຊາຊົນແຂວງວຽງຈັນ ເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການຜ່ານບົດລາຍງານການເມືອງໃນໄລຍະສະໄໝກອງປະຊຸມໃຫຍ່ຄັ້ງທີII(2018-2023)ທີ່ຜ່ານມາ ແລະທິດທາງແຜນການຄາດໝາຍສູ້ຊົນໃນໄລຍະ05 ປີຕໍ່ໜ້າ ( 2023-2027) ໂດຍສະເພາະສະໄໝກອງປະຊຸມໃຫຍ່ຄັ້ງທີ III ເຊິ່ງຍົກໃຫ້ເຫັນຕະຫຼອດການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ II ຂອງໜ່ວຍສະຫະພັນແມ່ຍິງສະພາປະຊາຊົນແຂວງວຽງຈັນ ພາຍໃຕ້ການຊີ້ນຳ-ນຳພາຂອງຄະນະພັກ ບວກກັບການເປັນເຈົ້າການ ຂອງຄະນະໜ່ວຍສະຫະພັນແມ່ຍິງ ຕໍ່ກັບສະມາຊິກພາຍໃນ ດ້ວຍການເຂົ້າຮ່ວມເຄື່ອນໄຫວທຸກຂະບວນການທີ່ຕິດພັນກັບວຽກງານວິຊາສະເພາະຂອງຕົນ ແລະ ປະຕິບັດວຽກງານທີ່ການຈັດຕັ້ງຂັ້ນເທິງມອບໝາຍໃຫ້ໄດ້ຮັບຜົນສຳເລັດຕາມຄາດໝາຍ, ໂດຍຖືເອົາວຽກງານສຶກສາອົບຮົມການເມືອງ-ແນວຄິດເປັນພື້ນຖານສຳຄັນເພື່ອສ້າງໃຫ້ສະມາຊິກພາຍໃນມີຄຸນທາດການເມືອງໜັກແໜ້ນຕໍ່ການຈັດຕັ້ງ, ມີຄຸນສົມບັດສິນທຳປະຕິວັດມີສະຕິລະວັງຕົວຕໍ່ກົນອຸບາຍຫັນປ່ຽນໂດຍສັນຕິຂອງສັດຕູ ແລະ ຂອງກຸ່ມຄົນບໍ່ດີ, ນຳເອົາແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດໂດຍສະເພາະ ມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ມະຕິກອງປະຊຸມໃຫຍ່ຄັ້ງທີ VI ຂອງອົງຄະນະພັກແຂວງ.

ໜ່ວຍສະຫະພັນແມ່ຍິງສະພາປະຊາຊົນແຂວງວຽງຈັນ ໄດ້ເອົາໃຈໃສ່ນຳເອົາເນື້ອໃນການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 3 ດີ, ຜົນລະເມືອງດີ, ພັດທະນາດີ, ສ້າງຄອບຄົວມີຄວາມພາສຸກ, ຂອງສະຫະພັນແມ່ຍິງສະພາປະຊາຊົນແຂວງຢ່າງເປັນປົກກະຕິ ໄປຄຽງຄູ່ກັນນັ້ນ ສະມາຊິກແມ່ຍິງພວກເຮົາໄດ້ເອົາໃຈໃສ່ປະກອບສ່ວນເຂົ້າໃນວຽກງານຕ່າງໆຂອງພັກ-ລັດ ແລະ ມີຜົນງານດີເດັ່ນໃນການປະກອບສ່ວນດ້ານເຮື່ອແຮງສະຕິປັນຍາເຂົ້າໃນຂະບວນການແຂ່ງຂັນຍ້ອງຍໍເຊັ່ນ: ໄດ້ຮັບຫຼຽນໄຊແຮງງານຊັ້ນ II ຈຳນວນ 5 ທ່ານ, ຊັ້ນ III ຈຳນວນ3ທ່ານ,ຫຼຽນກາແຮງງານ ຈຳນວນ 4 ທ່ານ, ຍ້ອງຍໍລັດຖະບານ ຈຳນວນ 4 ທ່ານ, ຍ້ອງຍໍຈາກແມ່ຍິງແຂວງ ຈຳນວນ 4 ຄັ້ງ 16 ທ່ານ, ຍ້ອງຍໍຂອງອົງການປົກຄອງແຂວງປະຈຳປີ 2 ຄັ້ງ 16 ທ່ານ ຈາກນັ້ນກອງປະຊຸມໄດ້ເປັນເອກະສັນກັນຢ່າງສົມບູນ ຮັບຮອງເອົາການເລືອກຕັ້ງປ່ອນບັດເລືອກຕັ້ງຄະນະໜ່ວຍສະຫະພັນແມ່ຍິງ ຊຸດໃໝ່ ສະໄໝທີ III ເຊິ່ງປະກອບມີ 3 ສະຫາຍ ເລືອກເອົາ ທ່ານ ນາງ ເຜີດສະໜອນ ສຸທຳມະວົງ ເປັນປະທານຮັບຜິດຊອບຊີ້ນຳລວມ, ທ່ານ ນາງ ແສງປະເສີດ ສຸທຳມະວົງ ເປັນຮອງຮັບຜິດຊອບວຽກງານກວດກາ, ທ່ານ ນາງ ບູລາຕີແສນທະວົງເປັນຄະນະຮັບຜິດຊອບວຽກງານສະຖິຕິ, ແຕ່ງຕັ້ງຜູ້ຊ່ວຍ 1 ທ່ານ ຄື: ທ່ານ ນາງ ຕິກ ພອນດາວັນ ເປັນຜູ້ຊ່ວຍວຽກງານກວດກາ.

**(ນັກຂ່າວ ສພຂ)**

# ກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງຫຼວງນ້ຳທາ




(ສພຊ) - ວັນທີ 21 ມີນາ2024 ຄະນະປະຈຳສະພາປະຊາຊົນແຂວງຫລວງນ້ຳທາ ໄດ້ເປີດກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ ປະຈຳເດືອນມີນາ 2024 ຂຶ້ນທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ພາຍໃຕ້ການເປັນປະທານຂອງທ່ານ ຄຳຟອງ ອິນມານີ ຮອງເລຂາຄະນະບໍລິຫານງານພັກແຂວງ ປະທານສະພາປະຊາຊົນແຂວງ, ມີຄະນະປະຈຳສະພາປະຊາຊົນແຂວງ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຮັບຟັງການລາຍງານກ່ຽວກັບຜົນການຈັດຕັ້ງປະຕິບັດບົດບັນທຶກຂອງຄະນະປະຈຳສະພາປະຊາຊົນແຂວງ ສະບັບ ເລກທີ 09/ຄປຈຂ, ລົງວັນທີ 1 ກຸມພາ 2024 ແລະ ພິຈາລະພິຈາລະນາຮັບຮອງເອົາການສະເໜີຂອງທ່ານເຈົ້າແຂວງ ກ່ຽວກັບການດັດແກ້ແຜນການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ 5 ປີ (2021-2025) ຂອງແຂວງ; ຮັບຮອງເອົາການສະເໜີຂອງທ່ານເຈົ້າແຂວງກ່ຽວກັບການດັດປັບໂຄງສ້າງລາຄານ້ຳປະປາ; ປຶກສາຫາລືກ່ຽວກັບໂກຕາລັດຖະກອນ ປະຈຳປີ2024; ຄົ້ນຄວ້າບົດລາຍງານຂອງຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ກ່ຽວກັບການສະເໜີ ໃຫ້ສະພາແຫ່ງຊາດ ພິຈາລະນາຄົ້ນຄວ້າຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ; ຄົ້ນຄວ້າໜັງສືສະເໜີຂອງຄະນະປະຈຳສະພາປະຊາຊົນແຂວງ ກ່ຽວກັບສະເໜີເຈົ້າໜ້າທີ່ປ້ອງກັນເວນຍາມຫ້ອງການ ຈຳນວນ 2 ຄົນ ແລະ ສ້າງຕັ້ງປ້ອມຍາມ ທີ່ປະຕູທາງເຂົ້າ-ອອກຫ້ອງການ 1 ປ້ອມ; ຄົ້ນຄວ້າປະກອບຄຳເຫັນຕໍ່ຮ່າງຂໍ້ຕົກລົງຂອງຄະນະປະຈຳສະພາປະຊາຊົນແຂວງ ວ່າດ້ວຍການແຕ່ງຕັ້ງຄະນະກວດກາພາຍໃນ; ພ້ອມທັງປະກອບຄຳເຫັນຕໍ່ຮ່າງແຜນພັບ ຂອງສະພາປະຊາຊົນແຂວງຫຼວງນ້ຳທາ ຊຸດທີ 2; ຮັບຟັງການລາຍງານກ່ຽວກັບ ຕົວເລກບົດລາຍງານແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ຈຳນວນໜຶ່ງທີ່ບໍ່ສອດຄ່ອງກັບ ມະຕິກອງປະຊຸມສະໄໝສາມັນເທື່ອທີ6ຂອງສະພາປະຊາຊົນແຂວງທີ່ໄດ້ເຊັນອອກໄປແລ້ວ; ນອກນັ້ນຍັງໄດ້ປຶກສາຫາລືວຽກງານພາຍໃນສະພາປະຊາຊົນແຂວງເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານມີຜົນສຳເລັດ ແລະ ມີຄຸນະພາບຂຶ້ນກວ່າເກົ່າ.

**(ນັກຂ່າວ ສພຂ)**





ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະເລຂາທິການສະພາແຫ່ງຊາດ
ກົມບໍລິຫານ-ພິທີການ

ເລກທີ 26 /ກບພ
ນະຄອນຫຼວງວຽງຈັນ, ວັນທີ 28 / 03 / 24

**ໜັງສືແຈ້ງເຊີນ**

- ອີງຕາມ ກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 20 ພະຈິກ 2017;
- ອີງຕາມ ມະຕິ ຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຈັດຊື້-ຈັດຈ້າງ ປະຈຳປີ 2024 ສະບັບເລກທີ 432/ຄປຈ, ລົງວັນທີ 18 ທັນວາ 2023.

ກົມບໍລິຫານ-ພິທີການ ຄະນະເລຂາທິການສະພາແຫ່ງຊາດ ຂໍຖືເປັນກຽດຮຽນເຊີນ:

ທ່ານ.......................................................................................................

ບໍລິສັດສ້ອມແປງລົດ, ຮ້ານສ້ອມແປງລົດ ແລະ ອູ່ສ້ອມແປງລົດ ທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນສົມທຽບລາຄາການສ້ອມແປງ+ປ່ຽນຖ່າຍອາໄຫຼ່, ປ່ຽນຢາງຕີນລົດ+ໝໍ້ໄຟລົດ, ສ້ອມແປງລະບົບແອລົດ, ເຮັດສີລົດ, ຕົບແຕ່ງລົດ, ອຸປະກອນບຳລຸງຮັກສາລົດ ແລະ ກ້ອງຕິດລົດ, ປະເພດລົດທົ່ວໄປ ແລະ ລົດໄຟຟ້າ ດ້ວຍທຶນຂອງລັດ ຂອງສະພາແຫ່ງຊາດ ປະຈຳປີ 2024 ດັ່ງລຸ່ມນີ້:

1. ປະເພດພາຫະນະ
   1.ລົດກະບະ 15 ຄັນ; 2. ລົດເກັງຈຳນວນ 34 ຄັນ; 3. ລົດເກັງໄຟຟ້າຈຳນວນ 15 ຄັນ; 4.ລົດຕູ້ຈຳນວນ 9 ຄັນ; 5. ລົດຈິບຈຳນວນ 15ຄັນ; 6. ລົດບັດ 25 ບ່ອນນັ່ງຈຳນວນ 2 ຄັນ; 7. ລົດບັດໄຟຟ້າ 45 ບ່ອນນັ່ງຈຳນວນ 01 ຄັນ ລວມທັງໝົດ: 88 ຄັນ.
2. ລາຍການສ້ອມແປງ
   2.1 ສ້ອມແປງ ແລະ ປ່ຽນຖ່າຍອາໄຫຼ່ (ລົດເກັງ, ລົດກະບະ, ລົດຕູ້, ລົດຈິບ);
   2.2 ສ້ອມແປງ ແລະ ປ່ຽນຖ່າຍອາໄຫຼ່(ສຳລັບລົດ ອີຊູຊຸ ຈຳນວນ 06 ຄັນ);
   2.3 ປ່ຽນຢາງຕີນລົດ+ໝໍ້ໄຟລົດ(ສຳລັບລົດຈຳນວນ 88 ຄັນ);
   2.4 ສ້ອມແປງລະບົບແອລົດ(ສຳລັບລົດຈຳນວນ 88 ຄັນ);
   2.5 ຕົບແຕ່ງ, ອຸປະກອນບຳລຸງຮັກສາລົດ ແລະ ກ້ອງຕິດລົດ(ສຳລັບລົດຈຳນວນ 88 ຄັນ);
   2.6 ສ້ອມແປງ ແລະ ປ່ຽນຖ່າຍອາໄຫຼ່ລະບົບລົດໄຟຟ້າ(ລົດHonggi E-QM5, ລົດບັດໄຟຟ້າ 45 ບ່ອນນັ່ງ BYD C8 ແລະ ລົດເກັງ BYD Yuan Pro);
   2.7 ເຮັດສີລົດທົ່ວໄປ(ສຳລັບລົດທັງໝົດ 88 ຄັນ).
3. ກຳນົດເວລາຈັດຕັ້ງປະຕິບັດ

- ກຳນົດວັນ, ເວລາລົງທະບຽນສະໝັກເຂົ້າຮ່ວມ ແລະ ພົວພັນເອົາຊອງປະມູນໄດ້ທີ່ພະແນກຄຸ້ມຄອງພາຫະນະ ກົມບໍລິຫານ-ພິທີການສະພາແຫ່ງຊາດ, ໃນໂມງລັດຖະການ ນັບແຕ່ວັນທີ 29 ມີນາ 2024 ຫາ ວັນທີ 5 ເມສາ 2024;
- ກຳນົດມື້ເປີດຊອງປະມູນເພື່ອຄັດເລືອກເອົາບໍລິສັດແມ່ນວັນຈັນ, ວັນທີ 8 ເມສາ 2024 ເວລາ 14:00ໂມງ ຢູ່ທີ່ຫ້ອງປະຊຸມຄະນະເລຂາທິການສະພາແຫ່ງຊາດ ຊັ້ນ 5 ໂດຍເປີດຊອງໜ້າຄະນະຮັບຜິດຊອບການປະມູນ, ບໍລິສັດທີ່ຈະເຂົ້າຮ່ວມຈະຕ້ອງຖືຊອງເອກະສານ, ບັນດາມາດຖານຂອງບໍລິສັດ, ພ້ອມໃບສະເໜີລາຄາ, ເຂົ້າຮ່ວກອງປະຊຸມເປີດຊອງ ແລະ ຖ້າກາຍກຳນົດວັນເວລາດັ່ງກ່າວແມ່ນຖືວ່າສະຫຼະສິດ.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງບໍລິສັດສ້ອມແປງລົດ, ຮ້ານສ້ອມແປງລົດ ແລະ ອູ່ສ້ອມແປງລົດ ທີ່ສົນໃຈເຂົ້າຮ່ວມຕາມວັນເວລານີ້ດ້ວຍ.

ຫົວໜ້າກົມບໍລິຫານ-ພິທີການ

ປອ. ອາລຸນຍາເດດ ຣາຊະພົນ

ກົມບໍລິຫານ-ພິທີການ(ພະແນກຄຸ້ມຄອງພາຫະນະ)
- ທ. ພົດດາວອນ ພັນທະວົງສີ 020. 22423323;
- ທ. ຈັນທະຈິດ ວິໄລແສງ 020. 95004313.

## ຄະນະຜູ້ແທນ...

(ຕໍ່ຈາກໜ້າ 1)

ຊາຊາດ, ຕົວແທນຈາກອົງການລັດຖະສະພາປະຈຳພາກພື້ນຈາກທົ່ວໂລກ ແລະ ອົງການຈັດຕັ້ງສາກົນຕ່າງໆ ເຂົ້າຮ່ວມຢ່າງຫຼວງຫຼາຍ.

ກອງປະຊຸມໃຫຍ່ຄັ້ງນີ້ ໄດ້ດຳເນີນໄປພາຍໃຕ້ຫົວຂໍ້: *"ການທູດລັດຖະສະພາ: ສ້າງຂົວສູ່ສັນຕິພາບ ແລະ ຄວາມເຂົ້າອົກເຂົ້າໃຈ"*. ນອກຈາກນັ້ນ, ຍັງມີກອງປະຊຸມກຸ່ມ ASEAN+3, ກອງປະຊຸມກຸ່ມອາຊີ-ປາຊີຟິກ, ກອງປະຊຸມຄະນະບໍລິຫານງານ IPU ແລະ ກອງປະຊຸມລະດັບກຳມາທິການຕ່າງໆຂອງ IPU ທີ່ຈັດຂຶ້ນຄວບຄູ່ກັນໄປ ເຊັ່ນ: ເວທີປາໄສສະມາຊິກລັດຖະສະພາເພດຍິງ IPU; ກອງປະຊຸມກຳມາທິການວ່າດ້ວຍສັນຕິພາບ ແລະ ຄວາມໝັ້ນຄົງສາກົນ; ກຳມາທິການວ່າດ້ວຍການພັດທະນາແບບຍືນຍົງ; ກຳມາທິການວ່າດ້ວຍປະຊາທິປະໄຕແລະສິດທິມະນຸດ; ກຳມາທິການປະຈຳວ່າດ້ວຍວຽກງານອົງການສະຫະປະຊາຊາດ; ເວທີປຶກສາຫາລືຂອງສະມາຊິກລັດຖະສະພາໜຸ່ມ ແລະ ອື່ນໆ.

ໃນກອງປະຊຸມໃຫຍ່ຄົບຄະນະ, ບັນດາຜູ້ແທນຈາກປະເທດຕ່າງໆ ໄດ້ຂຶ້ນກ່າວປາໄສພາຍໃຕ້ຫົວຂໍ້ຂອງກອງປະຊຸມ ເຊິ່ງໄດ້ຍົກໃຫ້ເຫັນເຖິງສິ່ງທ້າທາຍຕ່າງໆທີ່ກຳລັງເກີດຂຶ້ນໃນໂລກ ແລະ ບົດບາດສຳຄັນຂອງການຈັດຕັ້ງປະຕິບັດວຽກງານການທູດລັດຖະສະພາ ໂດຍສະເພາະແມ່ນຕໍ່ກັບການສົ່ງເສີມການແກ້ໄຂບັນຫາຂໍ້ຂັດແຍ້ງ ແລະ ການສົ່ງເສີມສັນຕິພາບໃນໂລກ; ພ້ອມດຽວກັນນັ້ນ, ກອງປະຊຸມຍັງໄດ້ປຶກສາຫາລືກັນກ່ຽວກັບບັນຫາທີ່ຮີບດ່ວນເປັນຄວາມກັງວົນຂອງປະຊາຄົມໂລກ ເຊັ່ນ: ວິກິດການດ້ານມະນຸດສະທຳຢູ່ເຂດກາຊາ, ຂໍ້ຂັດແຍ້ງໃນຕາເວັນອອກກາງ, ການກໍ່ການຮ້າຍ, ການເລືອກຕັ້ງໃນສາທາລະນະລັດໂບລິວາຣີ ຂອງເວເນຊູເອລາ ແລະ ການລະເມີດສິດທິມະນຸດຢູ່ປະເທດກົງໂກ.

ໃນກອງປະຊຸມໃຫຍ່ຄັ້ງນີ້, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຫົວໜ້າຄະນະຜູ້ແທນລາວ ໄດ້ກ່າວປາໄສໃນກອງປະຊຸມໃຫຍ່ຄົບຄະນະ ໂດຍທ່ານໄດ້ຍົກໃຫ້ເຫັນເຖິງສະພາບການຂອງໂລກໃນປັດຈຸບັນ ທີ່ເປັນໄພຂົ່ມຂູ່ຢ່າງໜັກໜ່ວງຕໍ່ການຮັກສາສັນຕິພາບ ແລະ ການຢູ່ຮ່ວມກັນຢ່າງສັນຕິຂອງມວນມະນຸດ, ໄດ້ຢືນຢັນທັດສະນະຂອງ ສປປລາວໃນການກ່າວປະນາມຕໍ່ທຸກຮູບການກໍ່ການຮ້າຍແລະສະແດງຄວາມໄວ້ອາໄລຢ່າງສຸດຊຶ້ງຕໍ່ຜູ້ເສຍຊີວິດ ແລະ ບາດເຈັບໃນເຫດການກໍ່ການຮ້າຍໃນໂຮງລະຄອນໂກຣກັສ, ເມືອງກຼາສະໂນໂກສະເກີ, ສະຫະພັນລັດເຊຍ. ທ່ານຮອງປະທານສະພາແຫ່ງຊາດຍົກໃຫ້ເຫັນເຖິງການຈັດຕັ້ງປະຕິບັດແນວທາງການຕ່າງປະເທດ ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມືຢ່າງສະເໝີຕົ້ນສະເໝີປາຍຂອງ ສປປ ລາວ ແລະການຈັດຕັ້ງປະຕິບັດວຽກງານການທູດລັດຖະສະພາຂອງສະພາແຫ່ງຊາດລາວ ດ້ວຍການສ້າງຄະນະມິດຕະພາບລັດຖະສະພາກັບບັນດາລັດຖະສະພາປະເທດຕ່າງໆ, ການເຄື່ອນໄຫວໃນເວທີລັດຖະສະພາພາກພື້ນ ແລະ ສາກົນ ໂດຍສະເພາະໃນທ້າຍປີ 2023 ຜ່ານມາ, ສະພາແຫ່ງຊາດລາວໄດ້ຮັບກຽດເປັນເຈົ້າພາບຈັດກອງປະຊຸມສຸດຍອດລັດຖະສະພາກຳປູເຈຍ-ລາວ-ຫວຽດນາມ (CLV)ຂຶ້ນເປັນຄັ້ງທຳອິດເພື່ອສົ່ງເສີມສັນຕິພາບ, ຄວາມສາມັກຄີ, ການຮ່ວມມືຮອບດ້ານເພື່ອກ້າວໄປສູ່ການພັດທະນາແບບຍືນຍົງຢູ່ 3 ປະເທດ ແລະ ໃນປີ 2024 ນີ້, ສປປ ລາວ ໄດ້ຮັບກຽດເປັນປະທານໝູນວຽນອາຊຽນ ແລະ ສະພາແຫ່ງຊາດລາວ ໄດ້ຮັບກຽດເປັນປະທານກອງປະຊຸມໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ(AIPA) ຄັ້ງທີ 45. ໃນຕອນທ້າຍ, ທ່ານໄດ້ຮຽກຮ້ອງໃຫ້ສະມາຊິກ IPU ເພີ່ມທະວີການປະຕິບັດບົດບາດການທູດລັດຖະສະພາ ທັງໃນຂອບສອງຝ່າຍ ແລະ ຫຼາຍຝ່າຍເພື່ອພ້ອມກັນສົ່ງເສີມການແກ້ໄຂບັນດາຂໍ້ຂັດແຍ້ງໂດຍສັນຕິວິທີ ຜ່ານການພົບປະເຈລະຈາ, ປະຕິບັດຕາມຫຼັກການແລະກົດໝາຍສາກົນເພື່ອປະກອບສ່ວນເຂົ້າໃນການສ້າງສັນຕິພາບທີ່ຍືນຍົງ ແລະ ການຢູ່ຮ່ວມກັນຢ່າງສັນຕິຂອງປະຊາຊາດໃນໂລກ.

ພ້ອມດຽວກັນນັ້ນ,ທ່ານຮອງປະທານສະພາແຫ່ງຊາດ ແລະ ຄະນະຜູ້ແທນທ່ານອື່ນໆ ຍັງໄດ້ເຂົ້າຮ່ວມ ແລະ ປະກອບຄຳເຫັນໃນເວທີປຶກສາຫາລືຂອງສະມາຊິກລັດຖະສະພາເພດຍິງ, ມີຄຳເຫັນໃນກອງປະຊຸມກຳມາທິການວ່າດ້ວຍສັນຕິພາບ ແລະ ຄວາມໝັ້ນຄົງສາກົນ, ກຳມາທິການວ່າດ້ວຍການພັດທະນາແບບຍືນຍົງ. ພິເສດ ຄະນະຜູ້ແທນລາວຍັງໄດ້ຮັບກຽດເປັນປະທານກອງປະຊຸມກຸ່ມ ASEAN+3 ດ້ວຍຜົນສຳເລັດຢ່າງຈົບງາມ, ໄດ້ພົບປະ ແລະ ໂອ້ລົມກັບຄະນະຜູ້ແທນຈາກລັດຖະສະພາປະເທດເພື່ອນມິດ, ອົງການລັດຖະສະພາພາກພື້ນ ເຊັ່ນ: ຄະນະຜູ້ແທນ ສສ.ຫວຽດນາມ, ກູບາ, ລັດເຊຍ, ມົງໂກນ, ສະວິດເຊີແລນ, ເລຂາທິການໃຫຍ່AIPA ເພື່ອປຶກສາຫາລືກ່ຽວກັບການພົວພັນຮ່ວມມືໃນຕໍ່ໜ້າ. ນອກຈາກນັ້ນ, ຄະນະຜູ້ແທນສະພາແຫ່ງຊາດ ຍັງໄດ້ຖືໂອກາດເດີນທາງໄປຢ້ຽມຢາມ ແລະ ເຮັດວຽກຢູ່ສະພາປະຊາຊົນທ້ອງຖິ່ນທີ່ແຂວງກົງຕົງໂວ, ສະວິດເຊີແລນ ເພື່ອແລກປ່ຽນ ແລະ ຖອດຖອນບົດຮຽນກ່ຽວກັບລະບົບກົງຈັກການຈັດຕັ້ງ ແລະ ການປະຕິບັດພາລະບົດບາດຂອງສະພາປະຊາຊົນທ້ອງຖິ່ນຂອງສະວິດເຊີແລນ.

ກອງປະຊຸມຄັ້ງນີ້, ໄດ້ດຳເນີນໄປໃນບັນຍາກາດທີ່ສະພາບການຂອງໂລກມີຄວາມເຄັ່ງຮ້ອນ ແລະ ຮັບຮອງເອົາຫຼາຍມະຕິທີ່ກ່ຽວພັນກັບບັນຫາການເມືອງໂລກ, *ມະຕິວ່າດ້ວຍການແກ້ໄຂຜົນກະທົບຕໍ່ສັງຄົມ ແລະ ມະນຸດສະທຳ ຈາກຜົນກະທົບຂອງລະບົບອາວຸດອັດຕະໂນມັດ ແລະ ປັນຍາປະດິດ ຂອງກຳມາທິການວ່າດ້ວຍສັນຕິພາບ ແລະ ຄວາມໝັ້ນຄົງສາກົນ ແລະ ມະຕິວ່າດ້ວຍການຮ່ວມມືເພື່ອການດຳເນີນການດ້ານດິນຟ້າອາກາດ: ການສົ່ງເສີມພະລັງງານສີຂຽວທີ່ສາມາດເຂົ້າເຖິງໄດ້ແລະການຮັບປະກັນນະວັດຕະກຳ, ຄວາມຮັບຜິດຊອບ ແລະ ຄວາມສະເໝີພາບຂອງກຳມາທິການວ່າດ້ວຍການພັດທະນາແບບຍືນຍົງ*. ກອງປະຊຸມໃຫຍ່ IPU ໄດ້ຮັບຮອງເອົາວັນເວລາ ແລະ ສະຖານທີ່ຈັດກອງປະຊຸມຄັ້ງທີ 149 ເຊິ່ງຈະຈັດຂຶ້ນໃນລະຫວ່າງວັນທີ 13-17 ຕຸລາ 2024, ທີ່ສຳນັກງານໃຫຍ່ IPU, ເຈນີວາ, ປະເທດສະວິດເຊີແລນ.

## ກວດກາເນື້ອໃນ...

(ຕໍ່ຈາກໜ້າ 1)

ຂັ້ນກັນສູງ; ພ້ອມນີ້ ກໍເພື່ອລະດົມຄວາມຄິດ, ສະຕິປັນຍາຈາກພາກສ່ວນທີ່ກ່ຽວຂ້ອງກັບການສ້າງ ແລະ ປັບປຸງກົດໝາຍ.

ທ່ານ ສົມມາດ ພົລເສນາ ໄດ້ມີຄຳເຫັນກ່າວເປີດກອງປະຊຸມ ເຊິ່ງມີບາງຕອນວ່າ: ກອງປະຊຸມຄັ້ງນີ້ ຈະໄດ້ຄົ້ນຄວ້າເນື້ອໃນຂອງຮ່າງກົດໝາຍວ່າດ້ວຍສະຫະກອນ (ສະບັບສ້າງໃໝ່) ເຊິ່ງເປັນໜຶ່ງໃນກົດໝາຍຈຳນວນ 9 ສະບັບ ທີ່ລັດຖະບານສະເໜີຫາຄະນະປະຈຳສະພາແຫ່ງຊາດຢ່າງລະອຽດ, ຮອບດ້ານ ແນໃສ່ເຮັດໃຫ້ຮ່າງກົດໝາຍມີເນື້ອໃນຄົບຖ້ວນ, ຮັດກຸມ ກ່ອນລາຍງານຜົນການກວດກາເນື້ອໃນຮອບດ້ານຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ເພື່ອຕົກລົງເອົາໄປທາບທາມຄຳເຫັນກັບບັນດາທ່ານສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນ ແຂວງ ແລະ ພະແນກການທີ່ກ່ຽວຂ້ອງ ກ່ອນນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX ທີ່ຈະໄດ້ໄຂຂຶ້ນໃນໄວໆນີ້.

ກອງປະຊຸມໄດ້ຮັບຟັງການສະເໜີກ່ຽວກັບການສ້າງຮ່າງກົດໝາຍດັ່ງກ່າວ; ຫຼັງຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ ພ້ອມກັນປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາ ແລະ ມີຈຸດສຸມ ເພື່ອເຮັດໃຫ້ກົດໝາຍມີເນື້ອໃນຄົບຖ້ວນ, ຮັດກຸມ ແລະ ສາມາດຈັດຕັ້ງປະຕິບັດໄດ້ດ້ວຍຄຸນນະພາບສູງ.

**(ນາງ ໄຊໂສພາພອນ ມິ່ງມຸງຄຸນ)**




# ຄວາມສຳເລັດ ບໍ່ໄດ້ເກີດຈາກການຂໍ

# ດົ້ນກົບເມກ

ການຂໍ, ໄຫວ້ວອນຂອງຊາວພຸດ ມີທ່າອ່ຽງໄຂວ່ເຂວກວ້າງຂວາງ ເພາະຜູ້ມີໜ້າທີ່ສອນ ໂດຍກົງ ແຕ່ບໍ່ສອນເລື່ອງນີ້ ຄືໄປສອນເລື່ອງສັດທາ, ເລື່ອງໂຄສະນາເຮັດບຸນ ແລະ ບໍລິຈາກທານເປັນສ່ວນໃຫຍ່ເພື່ອເອົາປັດໃຈ (ຊັບ-ເງິນ...) ໄປເຮັດຢ່າງອື່ນ ເຊິ່ງສ່ວນໃຫຍ່ກໍບອກວ່າ ເອົາໄປສ້າງ ແລະ ຖ້າຄົນສ່ວນໃຫຍ່ຢາກສ້າງແຕ່ວັດຖຸຜົນກໍຈະໄດ້ແຕ່ວັດຖຸ; ຖ້າຄິດສ້າງປັນຍາ ສ້າງຊັບພະຍາກອນມະນຸດເຮົາກໍຈະໄດ້ຄົນມີຄວາມຮູ້, ຄົນດຳເນີນຊີວິດຖືກທາງ ຢ່າລືມວ່າ: ປັນຍາຄືແກ່ນສາສະໜາພຸດ.

ສາສະໜາພຸດມຸ່ງປັນຍາ ເພາະ 45 ປີພະພຸດທະເຈົ້າທ່ຽວສອນເອົາປັນຍາໃຫ້ຄົນ; ຢ່າລືມວ່າຄົນຂາດປັນຍານັ້ນແຫຼະ ທີ່ເວົ້າແຕ່ບອກສອນໃຫ້ເຊື່ອ (ສັດທາ) ຢ່າງດຽວແລະຄົນທີ່ມີແຕ່ຄວາມເຊື່ອຢ່າງດຽວ ກໍພາກັນທ່ຽວຂໍໄຫວ້ວອນ ອ້ອນວອນໃຫ້ຊີວິດສຳເລັດ, ຜູ້ຂຽນຂໍເນັ້ນອີກວ່າຍ້ອນຜູ້ສອນບໍ່ສອນເລື່ອງປັນຍາ ຫຼືບໍ່ມີປັນຍາສອນ ຈຶ່ງເວົ້າແຕ່ເລື່ອງຄວາມເຊື່ອ ແລະ ບໍລິຈາກທານ, ຢ່າລືມວ່າບັນຫາຄົນເຮົາເກີດຈາກຄວາມບໍ່ຮູ້ ດັ່ງນັ້ນ, ພຸດທະສາສະໜາເກີດຂຶ້ນເພື່ອເອົາປັນຍາຖືກຕ້ອງໃຫ້ຄົນ ແຕ່ສາວົກຫຼາຍຄົນບໍ່ຮູ້ຈະສອນ, ບໍ່ມີປັນຍາສອນເລື່ອງປັນຍາໃຫ້ຊາວບ້ານ.

ຄົນສ່ວນໃຫຍ່ ເມື່ອຜູ້ສອນບໍ່ເວົ້າເລື່ອງປັນຍາ ຈຶ່ງເຂົ້າໃຈຄຳວ່າອະທິຖານ ໃນທາງໄຂວ່ເຂວຜິດທາງໄປໜ້າເລື້ອຍໆ. ຄົນສ່ວນໃຫຍ່ເຂົ້າໃຈວ່າ ຕັ້ງຈິດອະທິຖານຕໍ່ໜ້າພະພຸດທະຮູບສັກສິດ ແລ້ວໄປຕັ້ງໃຈລໍໃຫ້ສຳເລັດ ເຊິ່ງຜິດຄວາມໝາຍກົງ ເພາະອະທິຖານແປວ່າ ການຕັ້ງໃຈໃຫ້ໝັ້ນໃນເປົ້າໝາຍ, ຕັ້ງໃຈປາຖະໜາສິ່ງໃດໜຶ່ງ ເຖິງຈະຕັ້ງໃຈອະທິຖານຕໍ່ໜ້າພະພຸດທະຮູບກໍຕາມ ແຕ່ສິ່ງທີ່ຕາມມາຄື ລົງມືເຮັດໃນເປົ້າໝາຍ ຄືມີຄວາມພຽນຕາມມາດ້ວຍຈິດໃຈມຸ່ງໝັ້ນ (ຈິດ) ພຸດທະສາສະໜາ ຈຶ່ງມຸ່ງໃຫ້ຄົນສຶກສາຮຽນຮູ້ ໃຫ້ເກີດປັນຍາແທ້ຈິງ ບໍ່ແມ່ນສາສະໜາຂອງການອ້ອນວອນຂໍເອົາຈາກສິ່ງສັກສິດ.

ສັງລວມວ່າ: ຖ້າຜູ້ມີໜ້າທີ່ສອນບໍ່ຮູ້; ບໍ່ສອນເລື່ອງປັນຍາ ຄົນໃນສັງຄົມກໍຈະເຫົ່າກັນໄປໄຫວ້ວອນ, ຂໍພອນນຳວັດຖຸທີ່ຄົນເຊື່ອວ່າສັກສິດ ກໍຈະມີທັງຜີ ທັງເທບມົ້ວກັນໄປໝົດ!






# ສະແດງ – ປາກົດ – ປະຈັກ

'ສະແດງ', 'ປາກົດ' ແລະ 'ປະຈັກ' ເປັນຄຳທີ່ມີຄວາມໝາຍກ່ຽວຂ້ອງກັບການເຫັນດ້ວຍສາຍຕາ ເຊິ່ງໃຊ້ຄື ແລະ ຕ່າງກັນດັ່ງນີ້:

"ສະແດງ" ເປັນຄຳກິລິຍາຈາກເຄົ້າຂະແມ ស្ដែង (ສະແດງ) ໝາຍເຖິງ "ຊີ້ແຈງ, ອະທິບາຍ, ບອກໃຫ້ຮູ້" ເຊັ່ນ:

- ພະພຸດທະເຈົ້າສະແດງທຳມະເທສະໜາແກ່ປັນຈະວັກຄີ ໂດຍມີ 5 ທ່ານ ຄື ໂກນທັນຍະ, ວັບປະ, ພັດທິຍະ, ມະຫານາມະ ແລະ ອັດສະຊິ.

'ສະແດງ' ຍັງໝາຍເຖິງ "ເຮັດໃຫ້ປາກົດເຫັນ" ເຊັ່ນ :

- ຄຳດີ ສະແດງບັດປະຈຳຕົວຕໍ່ເຈົ້າໜ້າທີ່.
- ຄຳສະຫວັນ ສະແດງຕົວຕໍ່ໜ້າຫົວໜ້າໃໝ່ດ້ວຍໃບໜ້າຍິ້ມແຍ້ມແຈ່ມໃສ.

'ສະແດງ' ຍັງໝາຍເຖິງ "ອອກທ່າທາງບົດບາດໄປຕາມເລື່ອງລາວໃນຮູບເງົາ, ລະຄອນ..." ເຊັ່ນ

- ເສີນຫຼີງ ສະແດງຮູບເງົາໄດ້ຫຼາຍຮ້ອຍເລື່ອງ.
- ສີພາ ສະແດງລະຄອນຫຼາຍເລື່ອງ ສ່ວນຫຼາຍມັກສະແດງເປັນໂຕກົງ.

'ປາກົດ' ເປັນຄຳກິລິຍາຈາກເຄົ້າປາລີ Pākata (ປາກະຕະ) ແລ້ວແປງສຽງເປັນລາວວ່າ 'ປາກົດ' ໝາຍເຖິງ "ສະແດງອອກມາໃຫ້ເຫັນ" ເຊັ່ນ:

- ລາວໄດ້ປາກົດຕົວອອກຈາກຫຼັງເວທີ.
- ອາກາດໃນຊຸ່ມື້ນີ້ ປາກົດວ່າຮ້ອນຜິດປົກກະຕິ.
- ແນວຄິດເຫັນແກ່ຕົວຂອງຊາຍຜູ້ນັ້ນ ໄດ້ປາກົດເດັ່ນອອກມາແກ່ສາຍຕາມະຫາຊົນ.

'ປະຈັກ' ເປັນຄຳກິລິຍາຈາກເຄົ້າປາລີ Pacchakha (ປັຈຈັກຂະ) ແປງເປັນສຽງລາວວ່າ 'ປະຈັກ' ໝາຍເຖິງ "ຮູ້ຄັກ, ປາກົດແຈ້ງ ອາດເປັນທາງຕາຫຼືໃຈກໍໄດ້" ເຊັ່ນ

- ລາວໄດ້ເຮັດຜິດພາດທີ່ທຸກຄົນເຫັນໄດ້ຢ່າງປະຈັກຕາ.
- ຜູ້ໃດໄດ້ເຫັນປະຈັກຕາບັນຍາກາດຂອງມື້ນັ້ນ ແມ່ນບໍ່ສາມາດລືມໄດ້.
- ເວລາສອນພາສາ ຄູຕ້ອງໃຊ້ຮູບປະຈັກຕາ ເພື່ອໃຫ້ນັກຮຽນເຂົ້າໃຈໄດ້ໄວ.



# ຂຽນຄຳລາວໃຫ້ຖືກ

# ຄູແສງ

| ຖືກ | ຜິດ |
|---|---|
| ຂອກແຄແຈຮົ້ວ | ~~ຄອກແຄແຈຮົ້ວ~~ |
| ຄອກມ້າ | ~~ຂອກມ້າ~~ |
| ຮູ້ສຶກ | ~~ຮູ້ຊຶກ~~ |
| ໃຫ້ຊຶກໆ | ~~ໃຫ້ສຶກໆ~~ |
| ໝາກໄມ້ສຸກ | ~~ໝາກໄມ້ຊຸກ~~ |
| ຊຸກຍູ້ | ~~ສຸກຍູ້~~ |
| ສຸດທີ່ຮັກ | ~~ຊຸດທີ່ຮັກ~~ |
| ຄົບຊຸດ | ~~ຄົບສຸດ~~ |
| ສຸບໝວກ | ~~ຊຸບໝວກ~~ |
| ຊຸບຜັກ | ~~ສຸບຜັກ~~ |




# ວິທີເຮັດວຽກ

## ພາກທີ 5
## ບັນຫາວິທີເຮັດວຽກ

**ເຮັດວຽກໃຫ້ ໃຜ, ຮັບຜິດຊອບຕໍ່ໃຜ?.**

1. ຖ້າພວກເຮົາຖາມພະນັກງານວ່າວຽກການທີ່ເຂົາເຈົ້າພວມເຮັດຢູ່ນັ້ນແມ່ນເຮັດໃຫ້ໃຜ, ຮັບຜິດຊອບຕໍ່ໃຜ? ກໍເຫັນວ່າພະນັກງານສ່ວນຫຼາຍຈະຕອບວ່າແມ່ນເຮັດໃຫ້ລັດຖະບານ ຫຼື ເຮັດໃຫ້ພັກ, ຮັບຜິດຊອບ ຕໍ່ຊັ້ນສູງ. ຄວາມຕອບແນວນັ້ນແມ່ນຖືກພຽງແຕ່ເຄິ່ງດຽວ. ຖ້າພວກເຮົາຖາມຕໍ່ໄປອີກວ່າ: ລັດຖະບານ ແລະ ພັກ ເຮັດວຽກການເພື່ອໃຜ? ແລະ ຮັບຜິດຊອບຕໍ່ໃຜ? ກໍຢ້ານວ່າພະນັກງານຫຼາຍຄົນຈະຕອບບໍ່ໄດ້.

ລັດຖະບານ ແລະ ພັກແມ່ນມີຈຸດປະສົງຢາກຈະປົດປ່ອຍຊາດປົດປ່ອຍເອົາປະຊາຊົນອອກຈາກຄວາມທຸກ, ດັ່ງນັ້ນບໍ່ວ່າວຽກການອັນໃດກໍ່ແມ່ນເຮັດເພື່ອຜົນປະໂຫຍດຂອງປະຊາຊົນ ແລະ ຮັບຜິດຊອບຕໍ່ປະຊາຊົນ. ນັ້ນແມ່ນຫຼັກການທີ່ງ່າຍທີ່ສຸດຈະແຈ້ງທີ່ສຸດ. ແຕ່ວ່າພະນັກງານຫຼາຍຄົນຍັງບໍ່ທັນຮູ້, ເພາະສະນັ້ນໃນເວລາເຮັດວຽກ ຈຶ່ງມັກຜິດພາດ ຈົນເຖິງວ່າແບ່ງແຍກພະນັກງານຂອງລັດຖະບານ ແລະ ຂອງພັກອອກເປັນຝ່າຍໜຶ່ງ ແລະ ແຍກປະຊາຊົນອອກເປັນອີກຝ່າຍໜຶ່ງ.

ອ່ານຕໍ່ສະບັບໜ້າ...



## ສຸກສະບາຍຫາຍໂລດ

# ຜັກກູດ ຜັກພື້ນບ້ານທີ່ບໍ່ຄວນເບິ່ງຂ້າມ

ໂດຍ: ທິວກະທິ



ເມື່ອເວົ້າເຖິງຜັກກູດເຊື່ອວ່າຫຼາຍຄົນຄົງບໍ່ມີໃຜບໍ່ຮູ້ຜັກກູດ ເພາະຜັກກູດຖືເປັນພືດຊະນິດໜຶ່ງ ເຊິ່ງສາມາດນຳມາປຸງເປັນອາຫານໄດ້ແລະຍັງເປັນຜັກພື້ນບ້ານທີ່ມີປະໂຫຍດນຳອີກ ໂດຍມັກນິຍົມນຳຍອດອ່ອນ ແລະ ໃບອ່ອນມາປຸງອາຫານ ຫຼື ລວກກິນກັບແຈ່ວ. ສຳລັບພືດຊະນິດນີ້ມັກຂຶ້ນຢູ່ຕາມບໍລິເວນທີ່ລຸ່ມນ້ຳ, ແຄມຫ້ວຍ, ໜອງ ແລະ ບຶງ ຫຼື ໃນພື້ນທີ່ເປີດໂລ່ງ ຍິ່ງໃນໄລຍະໜ້າແລ້ງ ຜັກກູດຈະມີຣົດຊາດແຊບກວ່າລະດູອື່ນໆຜັກກູດຈະມີຣົດຈືດອົມຫວານ-ກອບເປັນຜັກທີ່ມີເສັ້ນໄຍການຫຼາຍ ເຮັດໃຫ້ລະບົບຂັບຖ່າຍດີ. ນອກຈາກນີ້, ຍັງມີວິຕາມິນເອ, ວິຕາມິນບີ 1, ວິຕາມິນບີ 2, ວິຕາມິນຊີ ແລະ ໄນອາຊິນຂ້ອນຂ້າງສູງນຳ ມາລວກ ຫຼື ຕົ້ມໃຫ້ສຸກ ໃຊ້ເປັນຜັກກິນກັບແຈ່ວປະເພດຕ່າງໆ ຫຼື ນຳໄປປຸງອາຫານໄດ້ຫຼາຍຢ່າງ ແລະຍັງມີຄຸນປະໂຫຍດອີກຫຼວງຫຼາຍ ດັ່ງນີ້:

1. ຊ່ວຍເພີ່ມພູມຄຸ້ມກັນ ແລະ ຊ່ວຍຕໍ່ຕ້ານອະນຸມູນອິດສະຫຼະ,

2. ນຳຜັກກູດມາຕົ້ມແລ້ວດື່ມ ຈະຊ່ວຍແກ້ໄຂ້ຕົວຮ້ອນໄດ້,

3. ເປັນຜັກທີ່ມີຄຸນສົມບັດຊ່ວຍດັບຮ້ອນ,

4. ຊ່ວຍຫຼຸດລະດັບຄໍເລດເຕີຣອນໃນເມັດເລືອດ,

5. ອຸດົມໄປດ້ວຍທາດເຫຼັກ ແລະ ບີຕາແຄໂຣທີນ,

6. ຊ່ວຍແກ້ພະຍາດເລືອດຈາງ,

7. ຊ່ວຍບຳລຸງສາຍຕາ,

8. ຊ່ວຍໃນລະບົບຂັບຖ່າຍ ເພາະເປັນຜັກທີ່ມີເສັ້ນໄຍສູງຫຼາຍ.

**ສິ່ງທີ່ຄວນລະວັງ:** ບໍ່ຄວນຮັບປະທານຜັກກູດແບບດິບໆ ຫຼື ແບບສົດໆ ໃນປະລິມານທີ່ຫຼາຍເກີນໄປ ເນື່ອງຈາກຜັກກູດມີສານອອກຊາເລດໃນປະລິມານທີ່ສູງ.

**ແຫຼ່ງຂໍ້ມູນ: Laos Health**

## ອາດ ກະວີລາວ

# 5 ເມສາ

\# ກົງໃຈ ແສງອຳພັນ

ເນື່ອງໃນໂອກາດ ວັນສ້າງຕັ້ງກຳລັງປ້ອງກັນຄວາມສະຫງົບ
ຄົບຮອບ 63 ປີ (5/4/1961-5/4/2024)

❋ 5 ເມສາແມ່ນມື້ ກຳເນີດກອງກຳລັງ
ປກສ ເປັນນາມ ແກ່ນແຂງຄົມກ້າ
63 ປີວຽນມາເຂົ້າ ປະຊາລາວຈຳຈື່
1961 ແມ່ນມື້ ກຳລັງກ້ອນກໍ່ມາ

❋ ເປັນກຳລັງແກ່ນກ້າ ປະຊາເພິ່ງອາໄສ
ເບິ່ງແຍງຄວາມປອດໄພ ໄພ່ປະຊາຊາວເຊື້ອ
ຕັ້ງແຕ່ເໜືອເຖິງໃຕ້ ພູມໃຈເມື່ອມີທ່ານ
ປ້ອງກັນຄວາມສະຫງົບເຂດບ້ານ ລາວພົ້ນຜ່ານໄພ

❋ ນັບແຕ່ເດີນຍ່າງຍ້າຍ ຂັບເຄື່ອນຕາມຖະໜົນ
ທ່ານເປັນຄົນດູແລ ເບິ່ງແຍງທຸກຝີກ້າວ
ຄອຍເຕືອນໄພລະວັງເຝົ້າ ຍາມເຮົານອນນັ່ງ
ເປັນກຳລັງເພິ່ງໃຫ້ ປະຊາໄດ້ອຸ່ນຄິງ

❋ ສົມວ່າເປັນຜູ້ກ້າ ຄົນຂອງພັກປະຊາຊົນ
ຍອມທຸກທົນສະຫຼະສຸກ ສ່ວນຕົວເພື່ອເມືອງບ້ານ
ຂານອາສາສະຫຼະເນື້ອ ເພື່ອປະຊາບໍ່ຢ້ານຢ່ອນ
ຂໍວິງວອນເທບໄທ້ ບັນດານໃຫ້ສິ່ງພອນ

❋ ການງານສຸຂະພາບພ້ອມ ຈະເລີນເດັ່ນຍືນຍາວ
ຕຳຫຼວດລາວໝົດທຸກຄົນ ຈົ່ງເຂັ້ມແຂງແຮງກ້າ
ເງິນຄຳມາໂຮມລົ້ນ ໄພຢ່າພານມານຢ່າແວ່
ມີແຕ່ສຸກລາບລົ້ນ ຈະເລີນເລື້ອຍຕະຫຼອດໄປ ທ່ານເອີຍ!






## ທັກທາຍ ລະບາຍ

*(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)*

\# ສາວຈົ້ມ

❋ **ຊົມ**ເຊີຍ ວັນສ້າງຕັ້ງກຳລັງປ້ອງກັນຄວາມສະຫງົບ ຄົບຮອບ **63 ປີ (5/4/1961-5/4/3024)** ຂໍໃຫ້ສົມມາດ ແໝ້ນ ພະໄມມຸ່ງໝາຍຫວັງ ທຸກທ່ານເບີ! ຂໍໃຫ້ມີຄວາມສຸກ ຕຳຫຼວດລາວຄົບກ້າ ໜ້າທີ່ການງານກ້າວ ດາວປະດັບເຕັມເຕັມບ່າ ກຽດຍົດສູງສຽດຟ້າ ຈະເລີນໜ້າຢ່າຖອຍ ໃຫ້ໄດ້ເປັນນາຍຮ້ອຍ ນາຍພັນຂຶ້ນເລື່ອນ ເຄື່ອນຂຶ້ນເປັນນາຍພົນກຽດກ້ອງ ປະຊາຍ້ອງຊື່ນຊົມ **ທ່ານເອີຍ!**

❋ **1 ເມສາ**ຊ້າກ້ອງ ປະຫວັດການຈົດຈຳ **ທ່ານ ກິບິນ ພົນເສນາ** ຖືກຄາດຕະກຳ ຄົບ **61 ປີໄດ້** ທ່ານສິ້ນລົມຫາຍໃຈລົງຍ້ອນ ເງື້ອມມືໂຈນປຸ້ນຊາດ ພວກປະຕິການຂວາຈັດ ວຽງຈັນລອບຂ້າ ສາກົນຮູ້ກ່າວຂານ **ພວກມັນລອບຂ້າລ້າງ** ວາງຫວ່ານເງິນໂດລາ ທ່ານບໍ່ຍອມສັດທາ ຈຶ່ງຖືກຄາດຕະກຳຫ້ຽມ ເຮັດໃຫ້ປວງປະຊາເຊື້ອ **ສູນເສຍຄົນຂອງຊາດ** ບຸດຕາທັງບຸດຕີພ່າພ້ອມ ກາຍເປັນລູກກຳພ້າ ຍ້ອນວ່າ **ຄວາມຊົ່ວຊ້າ** ຂອງພວກ**ໂຈນປ່ອງບ້າ** ທຳລາຍຂ້າຢ່າງເລືອດເຢັນ **ໜ່າຍເດ!**

**(ທ່ານ ກິບິນ ພົນເສນາ ຖືກຄາດຕະກຳ 1/4/1963)**

## ຊວນຍິ້ມ

\# ແອ່ນຕຸ້ງ

### ເລື່ອງ: ເທວະດາ

ມື້ໜຶ່ງເທວະດາລົງມາຈາກຟ້າ ເພື່ອສັງເກດເບິ່ງມະນຸດທັງຫຼາຍວ່າ ໃຜມີບັນຫາຈະໃຫ້ຊ່ວຍ, ໃຜເຮັດຊົ່ວກໍຈະພາໄປລົງນາຮົກ ເພີ່ນຕັດສິນໃຈໄປເຂົ້າຮ້ານເຫຼົ້າ ແລະ ກໍໄປແນະນຳຕົວ: ເທວະດາ: ຂ້ອຍຄືເທວະດາລົງມາເບິ່ງໂລກມະນຸດ ຊາຍຄົນໜຶ່ງເວົ້າຂຶ້ນວ່າ: ຮ້ວາຍ ! ບໍ່ແມ່ນຜີບ້າເບາະນີ້; ລອງປົວຂີ້ກາກຂ້ອຍເບິ່ງ ຖ້າແມ່ນເທວະດາແທ້, ເທວະດາກໍເອົາມືບາຍກົ້ນຈົນຂີ້ກາກດີກັບບາດ, ຫຼັງຈາກນັ້ນ ກໍເລີ່ມບາຍຄົນທີ່ເປັນພະຍາດສ່ວນຕົວຫຼາຍໆຄົນ; ພໍໄປຮອດພະນັກງານຄົນໜຶ່ງ ເທວະດາກຳລັງຊິບາຍ, ລາວເລີຍເວົ້າຂຶ້ນວ່າ:

- ຢ່າບາຍຂ້ອຍໄດ໋
- ອ້າວ ບໍ່ຢາກດີຫວາ?
- ບໍ່ ! ຄັນທ່ານບາຍ ຂະນ້ອຍກະດີຕວ່າ, ແຮ່ງຫາກະຂຽນໃບລາພັກບໍ່ສະບາຍມື້ວານນີ້ເອງ
- ???

## ຄະຕິເຕືອນໃຈ

\# ດອກຫຍ້າ

ງົວຄວາຍມ້າມີຄ່າທີ່ໜັງ ແລະ ຂົນ
ສ່ວນຍິງຊາຍນັ້ນມີຄ່າທີ່ຄຸນນະທຳ

ລັດຖະສະພາຕ່າງປະເທດ

# ລັດຖະບານອັງກິດ ສົ່ງຮ່າງກົດໝາຍເຂົ້າສະພາ ໃຊ້ອາຍຸຕັດສິດການຊື້ຢາສູບ

*ຖ້າກົດໝາຍດັ່ງກ່າວຜ່ານການເຫັນດີຈາກລັດຖະສະພາ, ໃນອະນາຄົດ ປະຊາຊົນຊາວອັງກິດທີ່ເກີດຫຼັງປີ 2009 ຈະບໍ່ມີສິດຊື້ຢາສູບໄດ້ຕາມກົດໝາຍ.*

ເວັບໄຊ Reuters ລາຍງານເມື່ອວັນທີ 20 ມີນາ 2024 ວ່າ: ລັດຖະບານອັງກິດໄດ້ສະເໜີຮ່າງກົດໝາຍທີ່ມີຈຸດປະສົງຈຳກັດການສູບຢາຕໍ່ລັດຖະສະພາ ເຊິ່ງຫາກໄດ້ຮັບການເຫັນດີ ແລະ ປະກາດບັງຄັບໃຊ້ ຊາວອັງກິດທີ່ເກີດຫຼັງປີ 2009 ຈະບໍ່ສາມາດຊື້ຢາສູບຕາມຮ້ານຄ້າໄດ້, ຜູ້ທີ່ຝ່າຝືນຈະຖືວ່າມີຄວາມຜິດຕາມກົດໝາຍ.

ກົດໝາຍວ່າດ້ວຍຢາສູບ (ແບບດັ້ງເດີມ) ແລະຢາສູບໄຟຟ້າກຳນົດວ່າຫ້າມຮ້ານຄ້າຈຳໜ່າຍຢາສູບໃຫ້ແກ່ເດັກທີ່ມີອາຍຸຕ່ຳກວ່າ15ປີ(ນັບເຖິງປັດຈຸບັນ) ໂດຍມີເປົ້າໝາຍທີ່ແທ້ຈິງຄືການຈຳກັດອາຍຸຂອງຜູ້ສູບຢາ ແລະ ຈະປັບຫຼຸດອາຍຸລົງທຸກປີ ໝາຍຄວາມວ່າຊາວອັງກິດຮຸ່ນຫຼັງຈາກນີ້ບໍ່ສາມາດຊື້ຢາສູບໄດ້ຕາມກົດໝາຍ.

ເຖິງແນວໃດກໍຕາມ, ກົດໝາຍສະບັບນີ້ບໍ່ໄດ້ລະບຸວ່າການສູບຢາແມ່ນຜິດກົດໝາຍແລະຄົນທີ່ມີອາຍຸສູງກວ່າກົດໝາຍກຳນົດ ກໍຍັງສາມາດຊື້ຢາສູບຕາມຮ້ານຄ້າໄດ້ໂດຍບໍ່ຜິດກົດໝາຍ.

ກົດໝາຍສະບັບນີ້ບໍ່ພຽງມີຈຸດປະສົງເພື່ອຈຳກັດການສູບຢາທົ່ວໄປເທົ່ານັ້ນ, ແຕ່ຍັງລວມເຖິງການສູບຢາໄຟຟ້າອີກດ້ວຍ ໂດຍໃຫ້ອຳນາດທາງການສາມາດຈຳກັດການຜະລິດຢາສູບໄຟຟ້າທີ່ມີກິ່ນໃໝ່ໆ ແລະ ຮູບແບບຂອງອຸປະກອນ ເພື່ອດຶງດູດຄວາມສົນໃຈຂອງເດັກນ້ອຍ; ນອກຈາກນີ້, ຍັງມີສິດອຳນາດທີ່ຈະສັ່ງໃຫ້ມີການປ່ຽນແປງຮູບແບບການຈັດວາງສິນຄ້າເຫຼົ່ານີ້ໃນຮ້ານຄ້າ ລວມທັງສາມາດຫ້າມວາງໄວ້ໃນພື້ນທີ່ທີ່ເດັກນ້ອຍສາມາດເບິ່ງເຫັນ ແລະ ຫ້າມວາງຢູ່ໃກ້ກັບສິນຄ້າບາງປະເພດ ເຊັ່ນ: ເຂົ້າໜົມຕ່າງໆ.



ຮ່າງກົດໝາຍທີ່ຈຳກັດອາຍຸຜູ້ຊື້ຢາສູບສະບັບນີ້ ຈະມອບອຳນາດໃຫ້ຕຳຫຼວດສັ່ງປັບໃໝຮ້ານຄ້າທີ່ຂາຍຢາສູບ ແລະຢາສູບໄຟຟ້າ ໃຫ້ແກ່ເຍົາວະຊົນທີ່ມີອາຍຸຕ່ຳກວ່າ 15 ປີ ໂດຍສາມາດປັບໃໝກັບທີ່ຢູ່ຈຸດເກີດເຫດເປັນຈຳນວນເງິນ 100 ປອນ (1 ປອນ ປະມານ 26.500 ກີບ) ແລະ ອາດຈະຖືກຕຳຫຼວດທີ່ຮັບຜິດຊອບໃນເຂດນັ້ນ ສັ່ງປັບໃໝອີກ 2.500 ປອນ.

ສ່ວນການແຈກຢາຍຕົວຢ່າງຢາສູບໄຟຟ້າໃຫ້ແກ່ປະຊາຊົນທີ່ມີອາຍຸບໍ່ເຖິງ 18 ປີ ກໍຖືວ່າຜິດກົດໝາຍເຊັ່ນກັນ.

ເນື້ອໃນຂອງກົດໝາຍອີກອັນໜຶ່ງທີ່ລັດຖະບານອັງກິດກຳລັງພິຈາລະນາ ກໍຄືການສັ່ງຫ້າມຢາສູບໄຟຟ້າແບບໃຊ້ແລ້ວຖິ້ມ ຕັ້ງແຕ່ເດືອນເມສາ 2025ເປັນຕົ້ນໄປເນື່ອງຈາກສະຖານະການທີ່ໜ້າເປັນຫ່ວງໃນປະເທດທີ່ພົບວ່າມີ9%ຂອງຈຳນວນທັງໝົດຂອງເດັກນ້ອຍອາຍຸລະຫວ່າງ 11-15 ປີ ທີ່ສູບຢາສູບໄຟຟ້າ.

ລັດຖະບານອັງກິດຄາດຫວັງວ່າ ຄວາມພະຍາຍາມເພື່ອຈຳກັດການສູບຢາເຫຼົ່ານີ້ ຈະຊ່ວຍປະຢັດງົບປະມານຂອງລັດໄດ້ຫຼາຍຕື້ປອນ ໂດຍສະເພາະແມ່ນງົບປະມານດ້ານສາທາລະນະສຸກທີ່ຕ້ອງໃຊ້ເພື່ອປິ່ນປົວຄົນເຈັບທີ່ເປັນພະຍາດທີ່ເກີດຈາກການສູບຢາ.

# ຫົວໜ້າຄະນະຜູ້ບໍລິຫານຮົງກົງ ລົງນາມກົດໝາຍປ້ອງກັນຄວາມໝັ້ນຄົງແຫ່ງຊາດ

ວັນສຸກທີ 22 ມີນາ 2024 ທ່ານ ຈອນ ລີ (John Lee) ຫົວໜ້າຄະນະຜູ້ບໍລິຫານເຂດບໍລິຫານພິເສດຮົງກົງ ໄດ້ລົງນາມໃນກົດໝາຍວ່າດ້ວຍປ້ອງກັນຄວາມໝັ້ນຄົງແຫ່ງຊາດ (Safeguar-ding National Security) ທີ່ຜ່ານການຮັບຮອງຈາກສະພານິຕິບັນຍັດຂອງຮົງກົງ ເມື່ອວັນທີ 19 ມີນາ ແລະ ມີຜົນບັງຄັບໃຊ້ໃນວັນເສົາທີ 23 ມີນາຜ່ານມາ.

ທ່ານ ຈອນ ລີ ກ່າວວ່າ: ກົດໝາຍດັ່ງກ່າວຊີ້ໃຫ້ເຫັນວ່າ ເຂດບໍລິຫານພິເສດຮົງກົງ ໄດ້ປະຕິບັດໜ້າທີ່ຄວາມຮັບຜິດຊອບຕາມລັດຖະທຳມະນູນກຳນົດໄວ້ໃນມາດຕາ 23 ຂອງກົດໝາຍພື້ນຖານຂອງຮົງກົງ (Basic Law) ໃນການສ້າງກົດໝາຍເປັນຂອງຕົນເອງ ເພື່ອປົກປັກຮັກສາຄວາມໝັ້ນຄົງແຫ່ງຊາດ.

ທ່ານກ່າວອີກວ່າ: ການສ້າງນິຕິກຳສຳເລັດຕາມມາດຕາ 23 ຂອງກົດໝາຍພື້ນຖານມີຄວາມສຳຄັນຕໍ່ການປະຕິບັດຕາມຫຼັກການ 'ໜຶ່ງປະເທດ, ສອງລະບົບ' (one country, two systems) ຮັບປະກັນການປົກປັກຮັກສາຄວາມໝັ້ນຄົງແຫ່ງຊາດຂອງ 'ໜຶ່ງປະເທດ' ຢ່າງມີປະສິດທິຜົນ ແລະ ຄວາມຈະເລີນຮຸ່ງເຮືອງ ແລະ ສະຖຽນລະພາບໃນໄລຍະຍາວຂອງເຂດບໍລິຫານພິເສດຮົງກົງ ພາຍໃຕ້ 'ສອງລະບົບ'.

ກົດໝາຍກຳນົດໂທດສູງສຸດຈຳຄຸກຕະຫຼອດຊີວິດ ສຳຫຼັບການໂຈມຕີທີ່ເປັນອັນຕະລາຍຕໍ່ຄວາມໝັ້ນຄົງແຫ່ງຊາດ ເຊິ່ງລວມທັງການກໍ່ກະບົດ ຫຼື ການທໍລະຍົດຕໍ່ຊາດ ແລະການປຸກລະດົມກໍ່ຄວາມບໍ່ສະຫງົບ, ໂທດຈຳຄຸກສູງສຸດ 20 ປີ ສຳຫຼັບການສອດແນມ ແລະ ການລັກຂໍ້ມູນຂອງລັດ, ແລະ ໂທດຈຳຄຸກສູງສຸດ 10 ປີ ສຳລັບການແຊກແຊງຈາກພາຍນອກ.

**ແຫຼ່ງຂ່າວ: ຊິນຮວາ**



# ສະພາສູງຣະວັນດາ ຜ່ານກົດໝາຍໃຫ້ສັດຕະຍາບັນຂໍ້ຕົກລົງການຮ່ວມມືການລີ້ໄພກັບອັງກິດ

ກອງປະຊຸມຄົບຄະນະຂອງສະພາສູງຣະວັນດາ ເມື່ອວັນພະຫັດທີ 21 ມີນາຜ່ານມາ ໄດ້ຜ່ານຮ່າງກົດໝາຍອະນຸມັດໃຫ້ສັດຕະຍາບັນຂໍ້ຕົກລົງລະຫວ່າງຣະວັນດາ ກັບ ອັງກິດ ພາຍໃຕ້ການຮ່ວມມືດ້ານການລີ້ໄພເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ບັນດາຂໍ້ຜູກມັດສາກົນທີ່ມີຮ່ວມກັນກ່ຽວກັບການປົກປ້ອງຜູ້ລີ້ໄພ ແລະ ຊາວອົບພະຍົບ.

ຢ່າງໜ້ອຍມີສະມາຊິກສະພາສູງ 21 ໃນຈຳນວນ 22 ທ່ານ ທີ່ເຂົ້າຮ່ວມກອງປະຊຸມ (ສະພາສູງ ມີທັງໝົດ 26 ທີ່ນັ່ງ) ໄດ້ລົງຄະແນນສຽງເຫັນດີກັບຂໍ້ຕົກລົງ; ກົດໝາຍດັ່ງກ່າວຜ່ານການອະນຸມັດ ພາຍຫຼັງໄດ້ຮັບບົດລາຍງານການວິເຄາະກ່ຽວກັບຮ່າງກົດໝາຍສະບັບນີ້ ໂດຍກຳມາທິການການຕ່າງປະເທດ, ການຮ່ວມມື ແລະ ຄວາມໝັ້ນຄົງ ເຊິ່ງຊ່ວຍເພີ່ມທະວີຄວາມໜ້າເຊື່ອຖື ແລະ ຄວາມລະອຽດຖີ່ຖ້ວນຂອງຂະບວນການສ້າງນິຕິກຳ.

ຂໍ້ຕົກລົງດັ່ງກ່າວເຊິ່ງຈະຊ່ວຍໃຫ້ອັງກິດສາມາດສົ່ງຜູ້ຂໍລີ້ໄພໄປຣະວັນດາ, ໄດ້ລົງນາມໃນເດືອນທັນວາປີຜ່ານມາທີ່ນະຄອນຫຼວງກີກາລີ (Kigali) ສາທາລະນະລັດຣະວັນດາ ໂດຍທ່ານ ເຈມສ໌ ເຄລເວີລີ (James Cleverly) ລັດຖະມົນຕີກະຊວງພາຍໃນອັງກິດ ແລະ ທ່ານ ວິນເຊນ ບີຣູຕາ (Vincent Biruta) ລັດຖະມົນຕີກະຊວງການຕ່າງປະເທດຣະວັນດາ.

ພາຍໃຕ້ຂໍ້ຕົກລົງດັ່ງກ່າວ, ຣະວັນດາຈະສ້າງຕັ້ງສານພິເສດເພື່ອແກ້ໄຂບັນດາຄະດີແລະບັນຫາທາງດ້ານກົດໝາຍທີ່ກ່ຽວຂ້ອງກັບຊາວອົບພະຍົບ ແລະ ຜູ້ຂໍລີ້ໄພ, ທ່ານ ເອັມມານູເອລ ອູກິຣາເຊບູຈາ (Emmanuel Ugirashebuja) ລັດຖະມົນຕີກະຊວງຍຸຕິທຳ ກ່າວຕໍ່ລັດຖະສະພາ ເມື່ອເດືອນກຸມພາຜ່ານມາ.

**ແຫຼ່ງຂ່າວ: ຊິນຮວາ**



# ກາເມີຣູນ ເລືອກຕັ້ງປະທານສະພາແຫ່ງຊາດ



ເມື່ອວັນສຸກທີ 22 ມີນາຜ່ານມາ, ທ່ານ ຄາວາເຢ ເຢກີ ຊິບຣິລ (Cavaye Yeguie Djibril) ສະມາຊິກອາວຸໂສຂອງຂະບວນການປະຊາທິປະໄຕປະຊາຊົນກາເມີຣູນ (Cameroon People's Democratic Movement) ເຊິ່ງເປັນພັກກຳອຳນາດຂອງສາທາລະນະລັດກາເມີຣູນ ໄດ້ຮັບເລືອກຕັ້ງຄືນໃໝ່ເປັນປະທານສະພາແຫ່ງຊາດ.

ໃນລະຫວ່າງກອງປະຊຸມຄົບຄະນະຂອງສະພາແຫ່ງຊາດ (ສະພາຕ່ຳ) ທີ່ນະຄອນຫຼວງຢາອູນເດ (Yaounde) ທ່ານ ຄາວາເຢ ໄດ້ຮັບການເລືອກຕັ້ງຄືນໃໝ່ ດ້ວຍຄະແນນ 143 ສຽງເຫັນດີ ຈາກ 156 ສຽງ ແລະ 13 ສຽງໂມຄະ.

ທ່ານ ຄາວາເຢ ເກີດປີ 1940 ແລະ ໄດ້ດຳລົງຕຳແໜ່ງປະທານສະພາແຫ່ງຊາດຕັ້ງແຕ່ປີ 1992 ເຮັດໃຫ້ທ່ານກາຍເປັນປະທານສະພາແຫ່ງຊາດທີ່ດຳລົງຕຳແໜ່ງຍາວນານທີ່ສຸດຂອງປະເທດ ນັບຕັ້ງແຕ່ໄດ້ຮັບເອກະລາດໃນປີ 1960.

**ແຫຼ່ງຂ່າວ: ຊິນຮວາ**

ເຝົ້າໄວ້ ໄດ້ບົດຮຽນ

# ບົດຮຽນກ່ຽວກັບການພັດທະນາ ແຮງງານ ແລະ ຄຸ້ມຄອງສິນເຊື່ອ

❖ ວິເສດ ສະແຫວງສຶກສາ

ບົດຮຽນທີ່ຄວນເບິ່ງໄວ້ໃນສອງເລື່ອງ ເພື່ອໝູນໃຊ້ຢູ່ປະເທດພວກເຮົາ ຕາມເງື່ອນໄຂ ຕົວຈິງ ທີ່ໄດ້ສັນຫາມາເລົ່າໃນບົດນີ້ ກໍຄືເລື່ອງ ການພັດທະນາການສຶກສາໃຫ້ຕິດພັນກັບການ ສົ່ງເສີມແຮງງານທີ່ປະຕິບັດກັນຢູ່ຫວຽດນາມ ໃນຊຸມປີຜ່ານມາແລະຂ່າວກ່ຽວກັບທາງການ ຈີນ ແກ້ໄຂບັນຫາສິນເຊື່ອທີ່ບໍ່ມີຄວາມໜ້າ ເຊື່ອຖືຍ້ອນດ້ອຍຄຸນນະພາບ.

ການພັດທະນາການສຶກສາຕິດພັນກັບ ການສົ່ງເສີມແຮງງານ ເປັນທີ່ຊາບກັນໂດຍທົ່ວ ໄປ ແລ້ວວ່າ ຫວຽດນາມ ໄດ້ຕັ້ງເປົ້າໝາຍຫັນປະ ເທດໃຫ້ກາຍເປັນປະເທດອຸດສາຫະກຳ ພາຍ ໃນປີ 2020 ແລະ ເປົ້າໝາຍທີ່ວ່ານີ້ ກໍບັນລຸ ຕາມທີ່ໄດ້ຕັ້ງເອົາໄວ້. ພະລັງຂັບເຄື່ອນຕົ້ນຕໍ ສູ່ຜົນສຳເລັດດັ່ງກ່າວ ກໍແມ່ນໄມ້ງັດດ້ານການ ສຶກສາ ທີ່ເລັ່ງພັດທະນາແຮງງານໃຫ້ໄດ້ສອງ ມາດຕະຖານຄື ຄຸນນະພາບ ແລະ ຄວາມທັນ ສະໄໝ. ແຮງງານທີ່ເປັນຂໍກຸນແຈເພື່ອຫັນ ຫວຽດນາມໃຫ້ເປັນປະເທດອຸດສາຫະກຳນັ້ນ ປະກອບດ້ວຍຄວາມຊຳນິຊຳນານໃນຄວາມຮູ້ ດ້ານເຕັກໂນໂລຊີ ອຸດສາຫະກຳ, ກົດໝາຍລະ ຫວ່າງປະເທດ, ວິຊາການດຳເນີນທຸລະກິດ ແລະ ການຄ້າ. ການພັດທະນາແຮງງານຂອງຫວຽດ ນາມເລັ່ງໃສ່ສອງທິດຄື: ເພື່ອນຳໃຊ້ຢູ່ພາຍໃນ ປະເທດ ແລະ ເພື່ອແຂ່ງຂັນໃນຕະຫຼາດແຮງ ງານລະດັບພາກພື້ນ ແລະ ສາກົນອີກດ້ວຍ. ສະ ຖິຕິເມື່ອປະມານ 3 ປີຜ່ານມາໃຫ້ຮູ້ວ່າ ຫວຽດ ນາມມີປະຊາກອນທີ່ຢູ່ໃນໄວອອກແຮງງານ ກວມເອົາກວ່າ 50%, ອາຍຸກຳລັງແຮງງານຂອງ ຫວຽດນາມນັ້ນ 26 ປີ (ໝາຍເຖິງຄວາມຍາວ ຂອງໄວທີ່ອອກແຮງງານໄດ້ຂອງຄົນຜູ້ໜຶ່ງ). ອັດຕາການຮູ້ໜັງສືຂອງປະຊາກອນ (ອ່ານອອກ ຂຽນໄດ້) ນັ້ນ ສູງກວ່າ 90%. ນີ້ລະຄືຈຸດແຂງ ໃນການພັດທະນາແຮງງານຢູ່ ຫວຽດນາມ.

ແກ້ບັນຫາສິນເຊື່ອທີ່ບໍ່ມີຄວາມໜ້າເຊື່ອ ຖືຄຳວ່າ "ສິນເຊື່ອ" ເປັນຊື່ທີ່ຟັງແລະກໍມີຄວາມ ໜ້າເຊື່ອວ່າຊັບສິນທີ່ໄດ້ລົງທຶນໃສ່ນັ້ນເປັນໜ້າ ເຊື່ອຖືອີຫຼີ, ຈະບໍ່ຄົດລ້ຽວບິດບ້ຽວປອມແປງ, ແຕ່ໃນຕົວຈິງ ແລະ ລະບົບສິນເຊື່ອໃນຫຼາຍ ປະເທດທີ່ຂາດການຄວບຄຸມ ຄຸ້ມຄອງດ້ວຍ ກົດໝາຍ ຢ່າງຄັກແນ່ ມັນຈະກາຍເປັນ "ເສຍ ເຊື່ອ" ຫຼາຍກວ່າ ຫຼື ເປັນ "ສິນເສືອ" ທີ່ມີແຕ່ ນອນກິນ ດ້ວຍກິນອຸບາຍລາຍຫຼ່ຽມສຳປະປີ. ຢູ່ ສປຈີນ ກ່ອນໜ້ານີ້ ປະມານ 5 ປີ ກໍມີສິນ ເຊື່ອທີ່ເຄື່ອນໄຫວບໍ່ສົມຊື່ ເຖິງຂັ້ນທາງການ ໄດ້ດຳເນີນການແກ້ໄຂດ່ວນ. ຂ່າວໃນຕົ້ນປີ 2019 ໄດ້ສະຫຼຸບຜົນບັ້ນຕິດຕາມກວດກາ ລະບົບສິນເສືອ ທີ່ສາມາດຈັບກຸມ ແລະ ສອບ ສວນ 380 ຫົວໜ່ວຍສິນເຊື່ອ ທີ່ເຮັດທຸລະ ກິດໃຫ້ກູ້ຢືມເງິນທາງອອນລາຍ. ສິນເຊື່ອເຫຼົ່າ ນີ້ ດຳເນີນທຸລະກິດໃຫ້ກູ້ຢືມຕາມການອະນຸ ມັດຂອງທາງການຄັກແນ່ ແຕ່ເນື່ອງຈາກວ່າ ເຈົ້າມີຜູ້ປະກອບການຍັງຂາດປະສົບການ ແລະ ຄວາມສາມາດໃນການກວດກາ ແລະ ປະເມີນ ຄວາມສ່ຽງ ດັ່ງນັ້ນ, ຈຶ່ງປະເຊີນກັບຄວາມສ່ຽງ ລົ້ມລະລາຍໃນລະດັບສູງ. ເມື່ອເປັນຄືແນວນັ້ນ, ຄວາມເຊື່ອໃນສິນເຊື່ອດັ່ງກ່າວກໍມະຫັບມະ ຫາຍ, ເກີດຄວາມວຸ້ນວາຍໃນສັງຄົມ ແລະ ສຽງວິພາກວິຈານໃນທາງບໍ່ດີອື່ນໆ ຢູ່ ສປຈີນ ນັ້ນທາງການບໍ່ອະນຸຍາດໃຫ້ລະບົບທະນາຄານ ແຫ່ງຊາດ ສະໜອງບ້ວງເງິນກູ້ຢືມໃຫ້ແກ່ບັນ ດາວິສາຫະກິດ ແລະ ຄອບຄົວ ແຕ່ໄດ້ອະນຸມັດ ໃຫ້ຂະແໜງການເງິນ ພາກເອກະຊົນ ເຮັດໜ້າ ທີ່ນີ້ (ໃຫ້ກູ້ຢືມ). ພາກສ່ວນທີ່ກູ້ຢືມເງິນໄປດຳ ເນີນທຸລະກິດນັ້ນ ໄດ້ແກ່ບັນດາວິສາຫະກິດ (ຜູ້ປະກອບການຂາຍຍ່ອຍ, ເຈົ້າຂອງຮ້ານອາ ຫານແລະຮູບແບບທຸລະກິດອື່ນໆ). ເມື່ອຂາດ ບົດຮຽນ, ຂາດປະສົບການ ບັນຫາການສໍ້ໂກງ, ຕົ້ມຕຸ໋ນ ກໍເກີດຂຶ້ນລະຫວ່າງຜູ້ສະໜອງທຶນ ແລະ ຜູ້ປະກອບການ ອັນໄດ້ສົ່ງຜົນກະທົບຕໍ່ ການເຊື່ອຖືຂອງຜູ້ໃຊ້ບໍລິການ.

ບໍລິສັດ ຫຼວງພະບາງ ພາວເວີ ຈຳກັດ
LUANG PRABANG POWER COMPANY LIMITED

ທະນາຄານພັດທະນາລາວ
LDB Bank




# ຄຸນປະໂຫຍດຂອງເຂັມທິດ

*# ບ່າວກະບື*

ໃນມື້ວັນເກີດຂອງຜູ້ເປັນພໍ່, ຝ່າຍລູກສາວມອບ ເຂັມຊີ້ທິດເປັນຂອງຂວັນໃຫ້ຜູ້ບັງເກີດເກົ້າ.

ພໍ່: "ຂອບໃຈຫຼາຍໆລູກເອີຍ ແຕ່ພໍ່ນີ້ບໍ່ເຄີຍເຂົ້າປ່າເຂົ້າດົງ, ບໍ່ເຄີຍທ່ອງທ່ຽວໃນທະເລຫຼວງກວ້າງໃຫຍ່, ພໍ່ບໍ່ເປັນນັກບິນ ແລະ ບໍ່ຄ່ອຍໄດ້ອອກຈາກບ້ານ. ພໍ່ບໍ່ຮູ້ວ່າບໍ່ໃຊ້ເຂັມທິດນີ້ແນວໃດ."

ລູກສາວ: "ແຕ່ວ່າເວລາພໍ່ເມົາເຫົ້າ ພໍ່ມັກຈະຫຼົງທາງເປັນປະຈຳ. ພໍ່ບໍ່ຮູ້ຮອດທິດຕາເວັນອອກ, ຕາເວັນຕົກ, ທິດໃຕ້ ທິດເໜືອຫຍັງໝົດ. ພໍ່ຕ້ອງເສຍເວລາຊອກເຮືອນບັກດົນໆ".

# THE USE OF COMPASS

***# BAOKBU***

On the occasion of the father's birthday, his daughter presented him a compass.

Father: " Thank you very much. But I neither pilot go to jungles non pass by any sea. I'm not a pilot and I hardly leave our village. I don't know what I can do with this compass "

Daughter: " But when you are drunk you always get lost. You don't know where is east, west, south and north. Therefore it takes you long time to get home ".

ຕາມພາສາ ກາຕູນ



ອາຫານເປີດພິດສະດານ ທຳລະມາຍສັດ.

● ໂດຍ : ພູຜາ

ຜູ້ຊີ້ນຳ
ທ່ານ ສິງຄຳ ວົງພະຈັນ

ຄະນະຊ່ຽວຊານທີ່ປຶກສາ
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

ຄະນະບັນນາທິການ
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

ກອງບັນນາທິການ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ

ອອກແບບ - ຈັດໜ້າ
ທ່ານ ນາງ ກຸກກິກ ບຸດດາໄຊ